# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ຕຸລາ 2024

ປີທີ 13

ສະບັບທີ 988

ລາຍສັປະດາ


## ເປີດຫ້ອງມູນເຊື້ອສະພາແຫ່ງຊາດຢ່າງເປັນທາງການ



(ສພຊ) - ຕອນບ່າຍວັນທີ 30 ກັນຍາ 2024 ໄດ້ມີພິທີເປີດຫ້ອງມູນເຊື້ອຂອງສະພາແຫ່ງຊາດ ຢ່າງເປັນທາງການ ໃຫ້ກຽດເຂົ້າຮ່ວມມີທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ທ່ານ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ, ຮອງປະທານປະເທດ, ອະດີດປະທານສະພາແຫ່ງຊາດຊຸດທີ VII ແລະ

ອ່ານຕໍ່ໜ້າ 8




## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກັນຍາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນ ກັນຍາ 2024 ໄດ້ດຳເນີນຂຶ້ນໃນລະຫວ່າງວັນທີ 23-24 ກັນຍາ 2024 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະຮອງລັດຖະມົນຕີກະຊວງ,

ອ່ານຕໍ່ໜ້າ 5

## ກະກຽມຄວາມພ້ອມຮອບດ້ານກອງປະຊຸມໄອປາ

(ສພຊ) - ກອງປະຊຸມເຝິກອົບຮົມສ້າງຂີດຄວາມສາມາດໃຫ້ແກ່ການກະກຽມຈັດກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ ຫຼື ໄວປາ (WAIPA) ໃຫ້ແກ່ຄະນະຮັບຜິດຊອບເນື້ອໃນ ແລະ ກອງເລຂາຊ່ວຍວຽກ ໄດ້ຈັດຂຶ້ນໃນວັນທີ 28-30 ກັນຍາ2024 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ປະທານຄະນະສະມາຊິກສະພາແຫ່ງຊາດເພດ



ຍິງ, ປະທານໄວປາ; ມີບັນດາທ່ານຮອງປະທານກຳມາທິການສະພາແຫ່ງຊາດ, ບັນດາທ່ານໃນຄະນະສະມາຊິກສະພາແຫ່ງຊາດເພດຍິງ, ທ່ານ ນາງ ຫງວຽນ ເຕື່ອງ ເວີນ (NGUYỄN Tường Vân) ອະດີດເລຂາ

ອ່ານຕໍ່ໜ້າ 4

## ຄົ້ນຄວ້າ, ວິໄຈ ແລະ ປັບປຸງລັດຖະທຳມະນູນ



(ສພຊ)- ວັນທີ 25-26 ກັນຍານີ້ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມ ຄົ້ນຄວ້າ, ວິໄຈ ແລະ ປັບປຸງເນື້ອໃນລັດຖະທຳມະນູນ ສະບັບປີ 2015 ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2015 (ຄລຊ); ເຂົ້າຮ່ວມມີບັນດາທ່ານຄະນະກຳມະການ, ກອງເລຂາ, ອະນຸກຳມະການຕ່າງໆ ຂອງ ຄລຊ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ກໍເພື່ອຄົ້ນຄວ້າ, ວິໄຈ ແລະ ເລືອກເຟັ້ນ ຄຳສະເໜີຂອງການຈັດຕັ້ງ ແລະ ບຸກ

ອ່ານຕໍ່ໜ້າ 8

## ປະເມີນການປະຕິບັດ 4 ກົດໝາຍ ຂົງເຂດວັດທະນະທຳ-ສັງຄົມ



ອ່ານຕໍ່ໜ້າ 6

## ມອບ-ຮັບເງິນຊ່ວຍເຫຼືອຜູ້ປະສົບອຸທົກກະໄພ




ອ່ານຕໍ່ໜ້າ 8

## ປຶກສາຫາລືແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ

(ສພຊ) - ເພື່ອຕີລາຄາຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ ແລະ ວິທີການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາໄລຍະຜ່ານມາຂອງແຕ່ລະພາກສ່ວນ, ວັນທີ 19 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ(ສພຊ) ໄດ້ຈັດກອງປະຊຸມປຶກສາຫາລືການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ ພາຍ



ໃຕ້ການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໂດຍມີບັນດາທ່ານປະທານ-ຮອງປະທານກຳມາທິການທີ່ກ່ຽວຂ້ອງ

ອ່ານຕໍ່ໜ້າ 7

**ຊົມເຊີຍວັນຄູແຫ່ງຊາດ ຄົບຮອບ 30 ປີ (07 ຕຸລາ 1994 - 07 ຕຸລາ 2024) ຢ່າງສຸດໃຈ!**

# ກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍການກວດສອບອິດສະຫຼະ



(ສພຊ)-ວັນທີ27-28 ກັນຍານີ້ ທີ່ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍການກວດສອບອິດສະຫຼະ (ສະບັບປັບປຸງ) ພາຍໃຕ້ການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນ ມີຮອງປະທານສະພາແຫ່ງຊາດ (ສພຊ) ໂດຍມີທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ, ບັນດາທ່ານປະທານ ແລະ ຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຄະນະຮັບຜິດຊອບປັບປຸງກົດໝາຍສະບັບນີ້ ແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການກວດສອບອິດສະຫຼະ (ສະບັບປັບປຸງ) ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ໃຫ້ມີການຄົ້ນຄວ້າທີ່ເລິກເຊິ່ງ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນທີ່ ສປປລາວ ເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ທັງເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະປັບປຸງກົດໝາຍກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕົກລົງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນວ່າ: ກອງປະຊຸມໃນຄັ້ງນີ້ແມ່ນມີຄວາມໝາຍສຳຄັນຫຼາຍ ເພາະເປັນກອງປະຊຸມຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍຢ່າງລະອຽດ, ຮອບດ້ານ ຕິດພັນກັບການຈັດຕັ້ງປະຕິບັດຕົວຈິງ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍ ມີຄວາມຄົບຖ້ວນ, ຮັດກຸມກວ່າເກົ່າ ແລ້ວສະຫຼຸບລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຕົກລົງເອົາໄປທາບທາມຄຳເຫັນກັບບັນດາສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄຂຂຶ້ນໃນທ້າຍປີນີ້.

ໃນທີ່ປະຊຸມ, ທ່ານ ສັນຕິພາບ ພົມວິຫານ ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນແລະຄວາມຈຳເປັນຂອງການປັບປຸງຮ່າງກົດໝາຍວ່າດ້ວຍການກວດສອບອິດສະຫຼະ (ສະບັບປັບປຸງ), ຕາງໜ້າກົມກົດໝາຍຂອງສະພາແຫ່ງຊາດໄດ້ສະເໜີເນື້ອໃນຂອງຮ່າງກົດໝາຍດັ່ງກ່າວ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບແລະເປັນເຈົ້າການຄົ້ນຄວ້າ, ປະກອບຄຳເຫັນຕໍ່ເນື້ອໃນຂອງຮ່າງກົດໝາຍທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການຕົນ ແນໃສ່ເຮັດໃຫ້ເນື້ອໃນມີຄວາມກະຈ່າງແຈ້ງ, ຮັດກຸມ ແລະ ແທດໝະກັບສະພາບຄວາມເປັນຈິງໃນປັດຈຸບັນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ສຸພາວັນ ທອມສະນິດ)**

# ມອບ-ຮັບ ກາເຟເມັດຂົ້ວ ຮັບໃຊ້ກອງປະຊຸມໄອປາ ແລະ ຢາປົວພະຍາດ ຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ




(ສພຊ)-ຕອນບ່າຍວັນທີ 25 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບຜະລິດຕະພັນກາເຟເມັດຂົ້ວ ມູນຄ່າ58,400,000ກີບ ເພື່ອຮັບໃຊ້ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງກ່າວມອບໂດຍທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຈຳປາສັກ, ກ່າວຮັບໂດຍທ່ານນາງອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດພ້ອມກ່າວຄຳຂອບໃຈຕໍ່ສະພາປະຊາຊົນແຂວງຈຳປາສັກທີ່ໄດ້ປະກອບສ່ວນສຳຄັນ ແລະ ສະໜັບສະໜູນຜະລິດຕະພັນທີ່ມີຄວາມເປັນເອກະລັກສະເພາະ ແລະເປັນຜະລິດຕະພັນພາຍໃນແຂວງຂອງຕົນ, ສາມາດຈັດເປັນເຄື່ອງຕ້ອນຂອງຝາກໃຫ້ແກ່ຄະນະຜູ້ແທນຕ່າງປະເທດ ທີ່ມາເຂົ້າຮ່ວມກອງປະຊຸມໄອປາຄັ້ງນີ້.

ຕອນສວາຍວັນທີ 24 ກັນຍາ ກໍໄດ້ມີການມອບ-ຮັບຢາປົວພະຍາດ ຈາກສະມາຄົມທຸລະກິດຢາ ແລະ ຜະລິດຕະພັນການແພດ ລວມມູນຄ່າ 48,400,000 ກີບ ໃຫ້ແກ່ພະແນກສາທາລະນະສຸກແຂວງຫົວພັນ ເພື່ອນຳໄປຊ່ວຍເຫຼືອພໍ່ແມ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ເຊິ່ງຕາງໜ້າກ່າວຮັບໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ທີ່ເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ພ້ອມກ່າວຄຳຂອບໃຈຕໍ່ສະມາຄົມດັ່ງກ່າວທີ່ໄດ້ປະກອບສ່ວນສຳຄັນແລະສະໜັບສະໜູນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຄັ້ງນີ້ ທັງໃຫ້ຄຳໝັ້ນສັນຍາວ່າ ຈະນຳເອົາການຊ່ວຍເຫຼືອໄປຮອດພໍ່ແມ່ປະຊາຊົນຜູ້ປະສົບໄພຢ່າງທົ່ວເຖິງ.



**(ນາງ ໄຊໂສພາພອນ ມິ່ງມຸງຄຸນ ແລະ ອານຸສອນ ພູມມີທອນ)**

# ກປຊສ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ກອງພົນໃຫຍ່ 279, 641 ແລະ 497



(ສພຊ)-ວັນທີ 12-18 ກັນຍາຜ່ານມາ, ທ່ານ ພົຈວ. ສົມວັນ ທຳມາໄຊ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ພ້ອມດ້ວຍຄະນະ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງ-ແຂວງວຽງຈັນ ຊຸດທີ II ຢູ່ອົງການ, ກົມກອງ ທີ່ຂຶ້ນກັບກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໂດຍໄດ້ເຄື່ອນໄຫວຢູ່ 3 ຈຸດຄື: ກອງພົນໃຫຍ່ 279, ກອງພົນໃຫຍ່ 641 ແລະ ກອງພົນໃຫຍ່497 (ແຂວງວຽງຈັນ) ເຊິ່ງມີບັນດາຄະນະພັກ-ຄະນະບັນຊາ, ພະນັກງານ, ນາຍ ແລະ ພົນທະຫານ-ຕຳຫຼວດ ເຂົ້າຮ່ວມທັງໝົດ 363 ສະຫາຍ.

ໃນການເຜີຍແຜ່ແຕ່ລະຈຸດ, ໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວຂອງກົມກອງໂດຍຫຍໍ້ ໂດຍສະເພາະແມ່ນຈຸດທີ່ຕັ້ງຂອງກົມກອງ, ຜົນສຳເລັດໃນການຈັດຕັ້ງປະຕິບັດແຕ່ລະຂົງເຂດວຽກງານ ເປັນຕົ້ນວຽກງານ ການເມືອງ, ການທະຫານ ແລະ ພະລາທິການ. ຈາກນັ້ນ, ສະມາຊິກສະພາ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງ-ແຂວງວຽງຈັນ ຊຸດທີ II; ພ້ອມທັງເຜີຍແຜ່ໃຫ້ຮູ້ເຖິງພາລະບົດບາດ, ສິດ ແລະໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ແນວທາງນະໂຍບາຍຂອງພັກ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ເນື້ອໃນຂອງ 2 ວາລະແຫ່ງຊາດ ຄື: ການແກ້ໄຂບັນຫາຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ.

ທ່ານ ພົຈວ. ສົມວັນ ທຳມາໄຊ ໄດ້ມີຄຳເຫັນປຸກລະດົມນາຍ ແລະ ພົນທະຫານ-ຕຳຫຼວດ ເອົາໃຈໃສ່ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຄຸ້ມຄອງທັບ-ຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອປະກອບສ່ວນເຮັດໃຫ້ບັນຫາທີ່ຍັງພົບຄວາມຫຍຸ້ງຍາກໄດ້ຮັບການແກ້ໄຂດີຂຶ້ນເທື່ອລະກ້າວ.

ພ້ອມດຽວກັນນັ້ນ, ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຈຳນວນໜຶ່ງ ເຊິ່ງມີບາງຄຳສະເໜີ ກໍໄດ້ຮັບການອະທິບາຍ, ຊີ້ແຈງກັບທີ່ ສ່ວນບັນຫາທີ່ກ່ຽວຂ້ອງກັບຫຼາຍພາກສ່ວນ ກໍຈະນຳໄປສະເໜີຕໍ່ພາກສ່ວນກ່ຽວຂ້ອງແກ້ໄຂ.

# ຮອງປະທານ ກສຕສ ຕິດຕາມກວດກາ ການຂະຫຍາຍພື້ນຖານໂຄງລ່າງຢູ່ຄຳມ່ວນ



(ສພຂ)-ວັນທີ 16-17 ກັນຍາຜ່ານມາ, ທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງ ແລະ ການພັດທະນາຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນເຊື່ອມຈອດເຂົ້າສູ່ແລວທາງເສດຖະກິດ ຢູ່ແຂວງຄຳມ່ວນ ເຊິ່ງຄະນະໄດ້ເຂົ້າພົບທ່ານ ວັນໄຊ ພອງສະຫວັນ ເຈົ້າແຂວງໆຄຳມ່ວນ ເພື່ອແຈ້ງຈຸດປະສົງໃນການເຄື່ອນໄຫວວຽກງານຄັ້ງນີ້. ຈາກນັ້ນ, ໄດ້ຈັດກອງປະຊຸມເພື່ອຕິດຕາມກວດກາວຽກງານດັ່ງກ່າວ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ພາຍໃຕ້ການເປັນປະທານຂອງທ່ານຮອງປະທານ ກສຕສ ໂດຍມີທ່ານ ນາງບົງອອນ ໄຊຍະສິດ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12, ບັນດາທ່ານປະທານ-ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຂອງ ສພຂ ພ້ອມດ້ວຍຫົວໜ້າກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ, ບັນດາພະແນກ

ອ່ານຕໍ່ໜ້າ 7

# ເຝິກອົບຮົມວຽກງານພິທີການທູດ




(ສພຊ) - ວັນເສົາທີ 28 ກັນຍານີ້, ສະພາແຫ່ງຊາດ (ສພຊ) ໄດ້ຈັດເຝິກອົບຮົມວຽກງານພິທີການທູດໃຫ້ແກ່ພັນລະຍາການນຳຂອງສພຊ ໂດຍການເປັນປະທານຂອງທ່ານນາງອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ເຊິ່ງມີທ່ານ ນາງ ເມແກນໂຈນສ໌(MeganJones) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ອົດສະຕຣາລີ ປະຈຳ ສປປລາວ, ທ່ານ ດຣ. ນາງ ວິພາວັນ ພົມວິຫານ ພັນລະຍາທ່ານປະທານສະພາແຫ່ງຊາດ, ທ່ານ ນາງ ວຽງເງິນ ໄຊຄຳພິທູນ ພັນລະຍາທ່ານຮອງນາຍົກລັດຖະມົນຕີ(ອາຈານຮັບເຊີນກິດຕິມະສັກ), ວິທະຍາກອນຈາກກົມພິທີການທູດ, ກະຊວງການຕ່າງປະເທດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ມີຄຳເຫັນກ່າວເປີດວ່າ: ວຽກງານພິທີການທູດເປັນວຽກງານໜຶ່ງທີ່ມີຄວາມໝາຍຄວາມສຳຄັນໃນການເຄື່ອນໄຫວພົວພັນໃນສັງຄົມ ໂດຍສະເພາະການພົວພັນສາກົນ; ການເຝິກອົບຮົມວຽກງານພິທີການທູດຄັ້ງນີ້ ມີຈຸດປະສົງເພື່ອກະກຽມຄວາມພ້ອມຮອບດ້ານໃຫ້ແກ່ພັນລະຍາການນຳຂອງສະພາແຫ່ງຊາດ ໃນການປະກອບສ່ວນເຂົ້າຮ່ວມການເຄື່ອນໄຫວ ແລະ ກິດຈະກຳຕ່າງໆ ຂອງພັນລະຍາການນຳຂອງຄະນະຜູ້ແທນຂັ້ນສູງທີ່ຈະເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45 ທີ່ສະພາແຫ່ງຊາດລາວຈະເປັນເຈົ້າພາບໃນເດືອນຕຸລານີ້ ໃຫ້ບັນລຸໄດ້ຕາມແຜນການທີ່ວາງໄວ້ຢ່າງມີປະສິດທິຜົນສູງ.

ໃນການເຝິກອົບຮົມ, ຜູ້ເຂົ້າຮ່ວມໄດ້ຮັບຟັງຄວາມຮູ້ພື້ນຖານທາງດ້ານພິທີການທູດ, ການກະກຽມພິທີການຕ່າງໆໃຫ້ແກ່ການນຳຂັ້ນສູງເຄື່ອນໄຫວຕ່າງປະເທດ ແລະ ຕ້ອນຮັບການນຳຂັ້ນສູງຂອງຕ່າງປະເທດ; ມາລະຍາດທາງສັງຄົມ ແລະ ເຝິກຕົວຈິງວິທີການເຂົ້າຮ່ວມງານລ້ຽງທາງການຕ່າງໆ; ບົດຮຽນ ແລະ ປະສົບການຂອງທ່ານ ດຣ. ນາງ ວິພາວັນພົມວິຫານໃນການຕິດຕາມການນຳຂັ້ນສູງຂອງສະພາແຫ່ງຊາດ ໄປເຄື່ອນໄຫວຕ່າງປະເທດ ແລະ ຕ້ອນຮັບຄະ ນະຜູ້ແທນຂັ້ນສູງຂອງລັດຖະສະພາຕ່າງປະເທດ. ນອກຈາກນັ້ນ, ຍັງໄດ້ມີການສາທິດຕົວຈິງວິທີການເຂົ້າຮ່ວມງານລ້ຽງທາງການຕ່າງໆ, ປະກອບຄວາມຄິດເຫັນ, ສົນທະນາຖາມ-ຕອບຢ່າງສ້າງສັນ, ກົງໄປກົງມາ, ຍົກໃຫ້ເຫັນສະພາບການຕົວຈິງ ແລະ ບົດຮຽນປະສົບການທີ່ດີ ເພື່ອໝູນໃຊ້ເຂົ້າໃນການເຄື່ອນໄຫວຕົວຈິງໃນໄລຍະກອງປະຊຸມໄອປາ ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ.

**(ນາງ ອາລິນ ສຸພົມມະປະກິດ)**

# ມອບວັດຖຸພັນ ເຂົ້າຫ້ອງມູນເຊື້ອ ແລະ ປະຫວັດສາດ



(ສພຊ) - ເນື່ອງໃນໂອກາດທີ່ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໄອປາຄັ້ງທີ45, ພວມຊຸ້ມຊ້ຽວສ້າງຫໍມູນເຊື້ອປະຫວັດສາດຂອງສະພາແຫ່ງຊາດແລະພວມຮິບໂຮມເອົາບັນດາວັດຖຸພັນທີ່ສຳຄັນ ເພື່ອມາປະກອບໃສ່ຫ້ອງມູນເຊື້ອໃຫ້ມີຄວາມຄົບຖ້ວນສົມບູນ ທັງເປັນການເກັບຮັກສາວັດຖຸພັນທີ່ມີຄຸນຄ່າມາໄວ້ຫ້ອງມູນເຊື້ອ ເຊິ່ງຈະເປັນບ່ອນທີ່ພະນັກງານ-ລັດຖະກອນ, ປະຊາຊົນ, ນ້ອງນັກຮຽນ ສາມາດເຂົ້າຊົມ ແລະ ຮຽນຮູ້ປະຫວັດສາດຂອງສະພາແຫ່ງຊາດລາວ ທີ່ມີອາຍຸໃກ້ຈະຮອດ 50 ປີ ໃນປີ 2025; ຕອນບ່າຍວັນທີ 26 ກັນຍາຜ່ານມາ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງເລຂາທິການສະພາແຫ່ງຊາດ ໄດ້ຕາງໜ້າຮັບບັນດາວັດຖຸພັນທີ່ກ່ຽວຂ້ອງເຖິງການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ໂດຍການຕາງໜ້າມອບຂອງທ່ານ ສິງ ເລືອງວິຫານ ຫົວໜ້າກົມວຽກງານຊົນເຜົ່າ, ກຳມາທິການບັນດາເຜົ່າ ເຊິ່ງປະກອບມີບັນດາເຄື່ອງເງິນເຊັ່ນ: ພາຖາດ, ຂັນ, ອູບ, ຈອງ, ບ່ວງ, ສ້ອມ, ມີດ, ອັ້ນຄີບນ້ຳກ້ອນ ແລະອູບໃສ່ຢາສູບກາຊ້າງ 3 ຫົວ, ງ້າວຂອງເຈົ້າຊີວິດ, ພາຖາດທອງ ແລະອື່ນໆ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ຮຽກຮ້ອງໃຫ້ບັນດາທ່ານຫາກມີວັດຖຸ ຫຼື ອຸປະກອນຕ່າງໆທີ່ ເຫັນວ່າເປັນມູນເຊື້ອປະຫວັດສາດທີ່ກ່ຽວພັນເຖິງສະພາແຫ່ງຊາດແຕ່ລະຊຸດ ກໍສາມາດນຳມາປະກອບສ່ວນເຂົ້າໃນ ຫ້ອງມູນເຊື້ອ ແລະ ປະຫວັດສາດຂອງສະພາແຫ່ງຊາດໄດ້.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**

# ສ້າງຄວາມເຂັ້ມແຂງດ້ານເນື້ອໃນ ເພື່ອຮັບໃຊ້ກອງປະຊຸມ AIPA-45

(ສພຊ) - ວັນທີ 26-28 ກັນຍາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະຮັບຜິດຊອບ ແລະ ກອງເລຂາເນື້ອໃນວຽກງານເສດຖະກິດ ແລະ ກອງປະຊຸມພົບປະກັບປະເທດ ສັງເກດການ ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການ ກວດສອບ (ກຜງສ) ເຊິ່ງມີບັນດາທ່ານປະທານ-ຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳ 18 ເຂດເລືອກຕັ້ງທົ່ວປະເທດ, ສສຊ ທີ່ເປັນກຳມະການຂອງ ກຜງສ, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ຜູ້ ຕາງໜ້າຈາກກະຊວງ ຄື: ການເງິນ, ການຕ່າງປະເທດ, ເຕັກໂນໂລຊີ ແລະ ການສື່ສານ, ທະນາຄານ ແຫ່ງ ສປປ ລາວ ພ້ອມ ດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງ; ນອກນັ້ນ, ຍັງມີວິທະຍາກອນຈາກກະຊວງການຕ່າງປະເທດແລະ ຜູ້ຊ່ຽວຊານດ້ານເສດຖະສາດຈາກສາກົນເຂົ້າຮ່ວມຢ່າງພ້ອມພຽງ.



ທ່ານ ປອ. ລີເບີ ລີບົວປາວ ກ່າວວ່າ: ກອງປະຊຸມສຳມະນາຄັ້ງນີ້ ມີຈຸດປະສົງເພື່ອຍົກລະດັບຄວາມຮູ້ ແລະຄວາມເຂົ້າໃຈໃຫ້ແກ່ຄະນະຮັບຜິດຊອບ ກໍຄືກອງເລຂາເນື້ອໃນວຽກງານເສດຖະກິດ ໃນການກະກຽມເອກະສານຮັບໃຊ້ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໃນຂົງເຂດເສດຖະກິດ, ແຜນການ, ການເງິນ ແລະການກວດສອບ ໃຫ້ເລິກເຊິ່ງທັງເປັນການສ້າງຄວາມເຂັ້ມແຂງໃນການປະຕິບັດໜ້າທີ່ຮັບໃຊ້ກອງປະຊຸມໄອປາ ໃນຂົງເຂດວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ.

ສຳມະນາກອນໄດ້ຮຽນຮູ້, ສຶກສາຄົ້ນຄວ້າແລະປະກອບຄຳເຫັນຕໍ່ຮ່າງເອກະສານໃນກອງປະຊຸມວຽກງານເສດຖະກິດເຊັ່ນ: ມະຕິ ແລະ ບົດອະທິບາຍມະຕິກອງປະຊຸມຂົງເຂດເສດຖະກິດ, ແຜນການ, ການເງິນ ແລະການກວດສອບ; ບັນດາບົດບັນທຶກກອງປະຊຸມ; ວາລະກອງປະຊຸມ; ການຮ່າງເອກະສານກອງປະຊຸມພົບປະກັບປະເທດສັງເກດການ ເຊິ່ງປະກອບມີລຳດັບກອງປະຊຸມ, ວາລະກອງປະຊຸມ, ບົດບັນຊາກອງປະຊຸມ, ບົດລາຍງານກອງປະຊຸມ ແລະ ບົດພົບປະ ຂອງປະທານກອງປະຊຸມຮ່ວມກັບບັນດາປະເທດສັງເກດການ. ພ້ອມກັນນັ້ນ, ຍັງໄດ້ແບ່ງເປັນກຸ່ມເພື່ອຄົ້ນຄວ້າປະກອບຄຳເຫັນໃສ່ເອກະສານຕ່າງໆ.

ໃນໂອກາດທີ່ມາເຂົ້າຮ່ວມກອງປະຊຸມ, ທ່ານຄຳດີວົງລ້ອມ ປະທານສະພາປະຊາຊົນແຂວງອຸດົມໄຊ ໄດ້ມອບຜະລິດຕະພັນຊາ ມູນຄ່າ 18,620,000 ກີບ ເພື່ອຮັບໃຊ້ກອງປະຊຸມໄອປາ ເຊິ່ງກ່າວຮັບໂດຍທ່ານ ປອ. ລີເບີ ລີບົວປາວ; ມີທ່ານ ນາງ ປິ່ງຄຳ ລາຊະສົມມາປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ, ທ່ານບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ເຂົ້າຮ່ວມ.

ທ່ານ ປອ. ລີເບີ ລີບົວປາວ ໄດ້ກ່າວຄຳຂອບໃຈຕໍ່ສະພາປະຊາຊົນແຂວງອຸດົມໄຊ ທີ່ໄດ້ປະກອບສ່ວນສຳຄັນ ແລະ ສະໜັບສະໜູນຜະລິດຕະພັນທີ່ມີຄວາມເປັນເອກະລັກສະເພາະ ແລະເປັນຜະລິດຕະພັນພາຍໃນແຂວງຂອງຕົນ, ສາມາດຈັດເປັນເຄື່ອງຕ້ອນຂອງຝາກໃຫ້ແກ່ຄະນະຜູ້ແທນຕ່າງປະເທດທີ່ມາເຂົ້າຮ່ວມກອງປະຊຸມໄອປາຄັ້ງນີ້.

**(ບຸນເກີດ ວົງໄຊຍາ ແລະ ນາງ ກຸກກິກ ບຸດດາໄຊ)**



# ເຝິກອົບຮົມໃຫ້ຄະນະຮັບຜິດຊອບ ກອງປະຊຸມ ສສຊ ໜຸ່ມໄອປາ



(ສພຊ) - ກອງປະຊຸມເຝິກອົບຮົມກ່ຽວກັບການບັນຊາກອງປະຊຸມ, ການພິຈາລະນາຮັບຮອງຮ່າງມະຕິແລະການປະກອບຄຳເຫັນໃນກອງປະຊຸມ, ການກະກຽມດ້ານເນື້ອໃນແລະດ້ານພະລາທິການປົ່ນອ້ອມກອງປະຊຸມ ໃຫ້ແກ່ ຄະນະຮັບຜິດຊອບເນື້ອໃນກອງປະຊຸມຄະນະສະມາຊິກລັດຖະສະພາໜຸ່ມໄອປາ (Young Parliamentarians of AIPA-YPA) ໃນຮູບແບບເຊິ່ງໜ້າແລະອອນລາຍ ໄດ້ຈັດຂຶ້ນໃນວັນທີ 26-27 ກັນຍານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ຫົວໜ້າອະນຸກຳມະການກອງເລຂາໄອປາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອເຮັດໃຫ້ການປະຕິບັດໜ້າທີ່ຂອງສະມາຊິກສະພາແຫ່ງຊາດ (ສສຊ) ໜຸ່ມລາວ ທີ່ຕາງໜ້າຄະນະຜູ້ແທນເຂົ້າຮ່ວມ ແລະ ຮັບໜ້າທີ່ເປັນປະທານກອງປະຊຸມຄະນະສະມາຊິກລັດຖະສະພາໜຸ່ມໄອປາ ໄດ້ເຂົ້າໃຈເລິກເຊິ່ງ ແລະ ປະສົບຜົນສຳເລັດໃນການເປັນປະທານກອງປະຊຸມຂອງ ສປປລາວ; ເພື່ອຮັບປະກັນໃຫ້ແກ່ການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ ສສຊ ໃນການບັນຊາກອງປະຊຸມ, ການບັນທຶກລາຍງານກອງປະຊຸມກັບທີ່ ແລະ ການປະກອບຄຳຄິດຄຳເຫັນ ພ້ອມທັງຊີ້ນຳ-ນຳພາການກະກຽມດ້ານເນື້ອໃນປະກອບໃສ່ບົດຕ່າງໆທີ່ກ່ຽວຂ້ອງໃນການຮັບໃຊ້ກອງປະຊຸມ YPA ທີ່ຈະຈັດຂຶ້ນໃນລະຫວ່າງກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ທັງເປັນການຍົກສູງຄວາມຮູ້, ຄວາມເຂົ້າໃຈ ແລະ ທັກສະໃນການກະກຽມທາງດ້ານເນື້ອໃນ, ການສື່ສານໃຫ້ແກ່ພະນັກງານ-ວິຊາການກອງເລຂາຊ່ວຍວຽກໃນກອງປະຊຸມ YPA.

ທ່ານ ສັນຍາ ປຣະເສີດ ກ່າວວ່າ: ສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຮັບກຽດເປັນປະທານໝູນວຽນຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ໃນປີ 2024 ແລະ ຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ 45 ລະຫວ່າງວັນທີ 17-23 ຕຸລານີ້ ທີ່ນະຄອນຫຼວງວຽງຈັນ; ໃນກອງປະຊຸມສະມັດຊາໃຫຍ່ໄອປາ ຈະມີກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ ຫຼື YPA ເປັນກົນໄກໜຶ່ງທີ່ສຳຄັນ ເພື່ອເປີດໂອກາດໃຫ້ສະມາຊິກລັດຖະສະພາໜຸ່ມພາຍໃນອາຊຽນ ໄດ້ປຶກສາຫາລື ແລະ ຮ່ວມກັນພິຈາລະນາຮັບຮອງເອົາມະຕິທີ່ກ່ຽວຂ້ອງກັບວຽກງານຊາວໜຸ່ມໃນອາຊຽນ. ຄະນະຮັບຜິດຊອບກໍໄດ້ເອົາໃຈໃສ່ກະກຽມຮ່າງມະຕິຂອງສະພາແຫ່ງຊາດລາວ ພາຍໃຕ້ຫົວຂໍ້: ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມໃນການສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງ ແລະ ກວມລວມ ເຊິ່ງຈະເປັນພື້ນຖານອັນສຳຄັນເພື່ອສົ່ງເສີມໃຫ້ຊາວໜຸ່ມໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງປະຊາຄົມອາຊຽນ ໃຫ້ສົມກັບຊາວໜຸ່ມເປັນກຳລັງແຮງທີ່ສຳຄັນໃນການຂັບເຄື່ອນການພັດທະນາ ທັງໃນປັດຈຸບັນ ແລະ ອະນາຄົດ.

ໃນການຝຶກອົບຮົມ, ໄດ້ແລກປ່ຽນຂໍ້ມູນແລະຖອດຖອນບົດຮຽນກ່ຽວກັບຂໍ້ລິເລີ່ມ ແລະ ຂະບວນການສ້າງຕັ້ງກອງປະຊຸມຄະນະສະມາຊິກລັດຖະສະພາໜຸ່ມໄອປາ, ຫຼັກການ, ການຈັດຕັ້ງດຳເນີນກອງປະຊຸມແລະບັນດາເນື້ອໃນຈຳເປັນຕ່າງໆໃນກອງປະຊຸມ YPA ແຕ່ລະໄລຍະ; ການຈັດຕັ້ງກອງປະຊຸມ, ການກະກຽມດ້ານເນື້ອໃນ, ເອກະສານ ແລະ ດ້ານພະລາທິການປົ່ນອ້ອມກອງປະຊຸມ ພ້ອມທັງການຄົ້ນຄວ້າຊອກຂໍ້ມູນປະກອບເຂົ້າໃສ່ເນື້ອໃນບົດຕ່າງໆທີ່ກ່ຽວຂ້ອງລວມທັງທັກສະການບັນຊາກອງປະຊຸມ, ການປ້ອງກັນໃນເວລາພິຈາລະນາຮັບຮອງເອົາມະຕິຂອງຄະນະຜູ້ແທນທີ່ເປັນປະທານ ແລະ ຄະນະຜູ້ແທນທີ່ເຂົ້າຮ່ວມ; ທັກສະໃນການສື່ສານ, ການປະສານງານກັບພາກສ່ວນກ່ຽວຂ້ອງ ເພື່ອຮັບໃຊ້ໃນການເປັນເສນາທິການໃຫ້ແກ່ ສສຊ ໃນເວລາເຂົ້າຮ່ວມກອງປະຊຸມ YPA. ພ້ອມກັນນັ້ນ, ກໍໄດ້ແລກປ່ຽນບົດຮຽນໃນການກະກຽມ, ຄົ້ນຄວ້າ, ເຕັກນິກ ແລະ ຂັ້ນຕອນການຮ່າງມະຕິໃຫ້ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມໄອປາ-45; ລາຍງານຮ່າງມະຕິ ແລະ ບົດປະກອບຄຳເຫັນຂອງຮ່າງມະຕິວ່າດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມໃນການສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງແລະກວມລວມ; ບົດຮຽນ ແລະ ປະສົບການເຂົ້າຮ່ວມກອງປະຊຸມ YPA ຢູ່ປະເທດກຳປູເຈຍ ແລະ ອິນໂດເນເຊຍ; ກົນໄກການເຮັດວຽກ, ການຈັດແບ່ງງານ (ແບ່ງຄວາມຮັບຜິດຊອບ), ກະກຽມການຈັດກອງປະຊຸມ YPA ທີ່ ສປປລາວເປັນເຈົ້າພາບປີ 2024 ໃນກອງປະຊຸມໃຫຍ່ AIPA-45 ແລະ ກົນການປະສານງານກັບກອງເລຂາໄອປາ. ນອກຈາກນັ້ນ, ຍັງໄດ້ເຝິກຫັດຈຳລອງກອງປະຊຸມ YPA ໃນກອງປະຊຸມໃຫຍ່ AIPA-45.

**(ນາງ ກຸກກິກ ບຸດດາໄຊ)**

# ກມຍທ ເຄື່ອນໄຫວວຽກງານຢູ່ອັດຕະປື




(ສພຂ) - ວັນທີ 17 ກັນຍາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປືໄດ້ມີກອງປະຊຸມເພື່ອຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ສີສຸນທອນ ສ.ພາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ (ກມຍທ) ໂດຍການເຂົ້າຮ່ວມຂອງທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ຄະນະປະຈຳສະພາປະຊາຊົນແຂວງ, ບັນດາທ່ານຕາງໜ້າຈາກຫ້ອງວ່າການແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ພະແນກຍຸຕິທຳແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ (ປກສ), ອົງການກວດກາພັກ-ລັດແຂວງພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ.

ທີ່ປະຊຸມ, ທ່ານ ນາງ ຈັນທະລີ ສີສຸວົງ ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ລາຍງານຜົນການຕິດຕາມກວດກາວຽກງານຂົງເຂດຍຸຕິທຳໃນໄລຍະຜ່ານມາໃຫ້ຊາບວ່າ: ສະພາປະຊາຊົນແຂວງໄດ້ຮັບຄຳຮ້ອງ, ຄຳສະເໜີຂອງປະຊາຊົນ 14 ເລື່ອງ ໃນນັ້ນເປັນຄຳສະເໜີ 8 ເລື່ອງ, ຄຳຮ້ອງຂໍຄວາມເປັນທຳ 6 ເລື່ອງ. ພ້ອມນີ້, ຍັງໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ: ການຈັດຕັ້ງຜັນຂະຫຍາຍທິດທາງແຜນການປີ 2024 ຕາມ 6 ຄາດໝາຍສູ້ຊົນ, 10 ວຽກຈຸດສຸມ ແລະ 5 ມາດຕະການຈັດຕັ້ງປະຕິບັດຂອງສານປະຊາຊົນສູງສຸດທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ສະບັບເລກທີ 115/ສພຊ, ລົງວັນທີ 21 ພະຈິກ 2023; ການປັບປຸງກົນໄກການປະສານສົມທົບລະຫວ່າງສານປະຊາຊົນທ້ອງຖິ່ນກັບສານປະຊາຊົນສູງສຸດແລະພາກສ່ວນກ່ຽວຂ້ອງ; ການເຜີຍແຜ່, ເຊື່ອມຊຶມບັນດານິຕິກຳຂອງສານປະຊາຊົນສູງສຸດ ແລະ ເນື້ອໃນກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ; ການປັບ ປຸງກົງຈັກການຈັດຕັ້ງ, ສັບຊ້ອນ, ພັດທະນາ, ບຳລຸງສ້າງພະນັກງານ ແລະ ຜູ້ພິພາກສາພາຍໃນແຂວງ. ການຈັດຕັ້ງປະຕິ ບັດທິດທາງແຜນການປີ 2024 ຕາມ 5 ຄາດໝາຍສູ້ຊົນ, 14 ວຽກຈຸດສຸມ ແລະ 6 ມາດຕະການຈັດຕັ້ງປະຕິບັດຂອງອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ສະບັບເລກທີ 116/ສພຊ, ລົງວັນທີ 21 ພະຈິກ 2023; ການຍົກສູງຄຸນນະພາບໃນການຄົ້ນຄວ້າພິຈາ ລະນາແກ້ໄຂຄະດີ, ການຖະແຫຼງແລະການສັ່ງຟ້ອງຜູ້ຖືກຫາຂຶ້ນສານ; ການກວດກາ ແລະ ຊີ້ນຊາຕິລາຄາຫຼັກຖານ; ການປັບປຸງກົນໄກ, ຮູບການ ແລະວິທີການຕິດຕາມກວດກາການປະຕິບັດກົດໝາຍ ເຊັ່ນ: ຕິດຕາມກວດກາການດຳເນີນຄະດີຂອງສານ, ການນຳໃຊ້ແລະປະຕິບັດ 7 ມາດຕະການສະກັດກັ້ນຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ການປະຕິບັດຄຳຕັດສິນຂອງສານ, ການເຜີຍແຜ່ ແລະ ເຊື່ອມຊຶມບັນດານິຕິກຳຂອງອົງການໄອຍະການປະຊາຊົນສູງສຸດ ແລະ ເນື້ອໃນກົດໝາຍວ່າດ້ວຍອົງການໄອຍະການ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ການປັບປຸງກົງຈັກການຈັດຕັ້ງ, ສັບຊ້ອນ, ພັດທະນາ, ບຳລຸງສ້າງພະນັກງານໄອຍະການພາຍໃນແຂວງ. ສະພາບການເຄື່ອນໄຫວວຽກງານປະຈຳປີ 2024 ໂດຍສະເພາະວຽກງານສືບສວນ-ສອບສວນ, ການດຳເນີນຄະດີ; ການໂຄສະນາ, ເຜີຍແຜ່ກົດໝາຍແລະນິຕິກຳໃຕ້ກົດໝາຍ, ແລະ ສະພາບການຈັດຕັ້ງປະຕິບັດກົດໝາຍ.

ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ສົນທະນາແລກປ່ຽນ ແລະ ປະກອບຄວາມຄິດຄວາມເຫັນຕໍ່ເນື້ອໃນຕ່າງໆຢ່າງພາວະວິໄສ, ແທດເໝາະຕົວຈິງ ແລະ ເລິກເຊິ່ງ ເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມຈຸດປະສົງຄາດໝາຍທີ່ວາງໄວ້.

**(ວິນັດ ສີສຸລາດ)**

## ກະກຽມ...

(ຕໍ່ຈາກໜ້າ 1)

ທິການໃຫຍ່ໄອປາ, ຮອງປະທານຄະນະອຳນວຍການສູນລັດຖະສະພາອາຊີ (PCAsia), ກອງເລຂາໄອປາ, ຜູ້ຕາງໜ້າຈາກອະນຸກຳມະການເນື້ອໃນຕ່າງໆ, ຄະນະຮັບຜິດຊອບກອງປະຊຸມໄອປາ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າພ້ອມພຽງ.

ໃນຄຳເຫັນກ່າວເປີດ, ທ່ານ ນາງທຸມມາລີ ວົງພະຈັນ ໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມເພື່ອຍົກສູງຂີດຄວາມສາມາດໃນການເປັນເຈົ້າພາບ ກໍຄືການກະກຽມຄວາມພ້ອມຮອບດ້ານ ເພື່ອຮັບປະກັນການເປັນປະທານກອງປະຊຸມ, ການກະກຽມເນື້ອໃນຕ່າງໆເຊັ່ນ: ບົດກ່າວເປີດ, ການແນະນຳຕົວຄະນະຜູ້ແທນ, ຮ່າງ ແລະ ການຜ່ານມະຕິຕະຫຼອດຮອດວຽກງານບໍລິຫານ, ພິທີການ, ການສື່ສານ ແລະ ດ້ານພະລາທິການຕ່າງໆ ໃຫ້ແກ່ການຈັດກອງປະຊຸມໃນຄັ້ງນີ້.

ທ່ານ ປອ. ນາງ ສຸນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ໃຫ້ກຽດມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຝຶກອົບຮົມຄັ້ງນີ້ ເປັນໂອກາດດີໃຫ້ແກ່ສະມາຊິກສະພາແຫ່ງຊາດເພດຍິງທີ່ຈະເຂົ້າຮ່ວມກອງປະຊຸມໄອປາ ໄດ້ຮຽນຮູ້ທັກສະຕ່າງໆໃນການເປັນປະທານກອງປະຊຸມ, ທັກສະໃນການກະກຽມເອກະສານ, ການຮ່າງມະຕິ, ການປຶກສາລືບັນຫາຕ່າງໆ ເພື່ອກ້າວສູ່ຈຸດໝາຍທີ່ວາງໄວ້. ທ່ານຍັງໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງໄດ້ເພີ່ມທະວີຄວາມຮັບຜິດຊອບໜ້າທີ່ການເມືອງຕໍ່ວຽກງານທີ່ໄດ້ຮັບມອບໝາຍ, ຮັບປະກັນໃນການເປັນປະທານ, ການບັນຊາກອງປະຊຸມ, ການພິຈາລະນາຮັບຮອງມະຕິ ແລະ ການປະກອບຄຳເຫັນໃນກອງປະຊຸມ ເພື່ອໃຫ້ສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ ມີຄວາມພ້ອມ, ຄວາມໝັ້ນໃຈໃນການຮັບໃຊ້ກອງປະຊຸມໃຫ້ມີຜົນສຳເລັດເປັນຢ່າງດີ.

ໃນການຝຶກອົບຮົມຕະຫຼອດໄລຍະ 3 ວັນ ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຄວາມຮູ້ພື້ນຖານກ່ຽວກັບໄອປາ ທີ່ສະເໜີໂດຍທ່ານ ນາງ ທຸງວຽນ ເຕື່ອງ ອັນ ກ່ຽວກັບຂໍ້ລິເລີ່ມ ແລະ ຂະບວນການສ້າງຕັ້ງກອງປະຊຸມສະມາຊິກລັດຖະສະພາຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (ໄອປາ), ຫຼັກການຈັດກອງປະຊຸມ, ເນື້ອໃນກອງປະຊຸມໄອປາ; ແລກປ່ຽນບົດຮຽນ ແລະ ທັກສະທີ່ຈຳເປັນໃນການຈັດກອງປະຊຸມແລະການກະກຽມເນື້ອໃນ; ການສົນທະນາ, ປ້ອງກັນ ແລະ ຮັບຮອງຮ່າງມະຕິ; ທັກສະການສື່ສານທີ່ຈຳເປັນ; ໄດ້ມີການແລກປ່ຽນຂໍ້ມູນ ແລະ ຖອດຖອນບົດຮຽນກ່ຽວກັບການຈັດກອງປະຊຸມເວທີຜູ້ນຳທາງການເມືອງຂອງເພດຍິງ (WAIPA Women's Political Leader's Forum) ແລະ ລາຍງານຄວາມພ້ອມໃນການກະກຽມກອງປະຊຸມດັ່ງກ່າວ; ແລກປ່ຽນປະສົບການຂອງອິນໂດເນເຊຍ ໃນການຈັດກອງປະຊຸມໄອປາປີ 2023 (ໄອປາ-44): ບົດຮຽນ, ສິ່ງທ້າທາຍ ແລະ ຄຳແນະນຳຕ່າງໆ.

**(ນາງ ກຸກກິກ ບຸດດາໄຊ)**

# ກອງທຶນຊ່ວຍເຫຼືອສັງຄົມ ມອບອຸປະກອນການຮຽນ ໃຫ້ໂຮງຮຽນເດັກກຳພ້າແຂວງຫຼວງພະບາງ



(ສພຊ) - ວັນທີ 06 ກັນຍາຜ່ານມາ, ທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມໂຮງຮຽນເດັກກຳພ້າແຂວງຫຼວງພະບາງ ເພື່ອກວດກາສະຖານທີ່ຈະປຸກສ້າງອາຄານຫໍພັກເພີ່ມຕື່ມໃຫ້ແກ່ນ້ອງນັກຮຽນ ເຊິ່ງຜູ້ອຳນວຍການໂຮງຮຽນ ໄດ້ລາຍງານໂດຍຫຍໍ້ໃຫ້ຮູ້ວ່າ: ໂຮງຮຽນ ມີຄູ-ອາຈານທັງໝົດ 38 ທ່ານ ຍິງ 27 ທ່ານ, ຄູສອນຕົວຈິງ 33 ທ່ານ ຍິງ 24 ທ່ານ, ມີອາສາສະໝັກ 1 ທ່ານ (ຍິງ); ມີນັກຮຽນ 414 ຄົນ ຍິງ 168 ຄົນໃນນີ້, ຊັ້ນປະຖົມ 161 ຄົນ ຍິງ 64 ຄົນ, ຊັ້ນມັດທະຍົມຕອນຕົ້ນ 177 ຄົນ ຍິງ 74 ຄົນ ແລະ ຊັ້ນມັດທະຍົມຕອນປາຍ 76 ຄົນ ຍິງ 30 ຄົນ; ມີຕຶກອາຄານຮຽນ 5 ຫຼັງ, ຫໍພັກ 6 ຫຼັງ, ສະໂມສອນ 1 ຫຼັງ, ຫ້ອງປະຊຸມ 1 ຫຼັງ, ເຮືອນຄົວລວມ 1 ຫຼັງ, ຫ້ອງສະໝຸດ 1 ຫຼັງ, ຫ້ອງວິທະຍາສາດ 1 ຫຼັງ, ຫ້ອງແພດ 1 ຫຼັງ, ຫ້ອງສິລະປະກຳ 1 ຫຼັງ, ຫ້ອງສິລະປະດົນຕີ 1 ຫຼັງ ແລະ ຫ້ອງພາລະ1ຫຼັງ. ສະພາບຫໍພັກນັກຮຽນແມ່ນຖືວ່າແອອັດຫຼາຍ ແລະຍັງບໍ່ທັນພຽງພໍເຮັດໃຫ້ອາກາດພາຍໃນຫໍພັກອົບເອົ້າ ໂດຍສະເພາະແມ່ນລະດູຮ້ອນ, ຊີວິດການເປັນຢູ່ຂອງນັກຮຽນຍັງມີຄວາມຫຍຸ້ງຍາກຫຼາຍຢ່າງ ຍ້ອນຄ່າຄອງຊີບສູງຂຶ້ນ ແຕ່ເງິນເບ້ຍລ້ຽງນັກຮຽນທີ່ໄດ້ຮັບແມ່ນບໍ່ພຽງພໍ ເຊິ່ງໄດ້ອາໄສພຽງແຕ່ສັງຄົມມາໃຫ້ການຊ່ວຍເຫຼືອເປັນບາງຄັ້ງຄາວ; ອຸປະກອນ ແລະ ສື່ການຮຽນ-ການສອນ ກໍຍັງບໍ່ທັນພຽງພໍກັບຄວາມຕ້ອງການ ເປັນຕົ້ນແມ່ນຄອມພິວເຕີ ແລະ ອື່ນໆ.

ທ່ານ ດຣ. ນາງ ວິພາວັນ ພົມວິຫານ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄູ-ອາຈານທີ່ສາມາດຍາດໄດ້ຜົນງານຫຼາຍຢ່າງໃຫ້ແກ່ໂຮງຮຽນໃນໄລຍະຜ່ານມາແລະມີຄຳເຫັນເນັ້ນໃສ່ການສ້າງແຜນການ ກໍຄືການຂຽນໂຄງການກໍ່ສ້າງເພື່ອຂໍທຶນນຳຜູ້ໃຫ້ທຶນ ເຊິ່ງຕ້ອງຜ່ານຄວາມເປັນເອກະພາບຂອງທຸກພາກສ່ວນກ່ຽວຂ້ອງເປັນຕົ້ນ: ຄະນະນຳ ແລະ ຄູ-ອາຈານ ພາຍໃນໂຮງຮຽນ, ສຶກສາທິການ ແລະ ກິລາເມືອງ-ແຂວງ ລວມທັງການນຳຂອງແຂວງ. ໃນໂອກາດນີ້, ຍັງໄດ້ມອບອຸປະກອນການຮຽນ ແລະ ອາຫານແຫ້ງຈຳນວນໜຶ່ງ ລວມມູນຄ່າ 9,185,000 ກີບ ແລະ ແນະ ນຳໃຫ້ເຮັດໜັງສືສະເໜີຫາກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ເຊິ່ງຈະໄດ້ມອບຄອມພິວເຕີ 03 ຊຸດ ແລະ ເງິນຈຳນວນ 50 ລ້ານກີບ ໃຫ້ແກ່ໂຮງຮຽນດັ່ງກ່າວອີກດ້ວຍ.

**(ຄຳຫຼ້າ ພອນພິລາ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເປັນຕົ້ນ ບົດລາຍງານຄວາມຄືບໜ້າຂອງການກະກຽມຮອບດ້ານໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ແລະກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳໄອປາ ພ້ອມທັງທິດທາງແຜນການວຽກງານຈຸດສຸມໃນຕໍ່ໜ້າ; ບົດລາຍງານຜົນການປັບປຸງເນື້ອໃນຮ່າງກົດໝາຍວ່າດ້ວຍການຕ້ານການຟອກເງິນແລະສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ)ຕາມການສະເໜີຂອງນາຍົກລັດຖະມົນຕີແລະການປະກອບຄຳເຫັນຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 08 ສິງຫາ 2024; ບົດລາຍງານການກະກຽມຄວາມພ້ອມຂອງຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຢູ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX; ບົດລາຍງານການສະເໜີແຕ່ງຕັ້ງ, ຍົກຍ້າຍບຸກຄະລາກອນຂອງສານປະຊາຊົນ ຈຳນວນໜຶ່ງ; ບົດລາຍງານກ່ຽວກັບຮ່າງແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດຊຸດທີ IX; ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດວັດທະນະທຳ-ສັງຄົມ; ບົດລາຍງານການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດແຫ່ງຊາດ; ບົດລາຍງານການຄົ້ນຄວ້າ ແລະ ມີຄຳເຫັນຕໍ່ຮ່າງຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030 ແລະ ວິໄສທັດຮອດປີ 2040; ບົດລາບງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍຫັນປ່ຽນປະເພດທີ່ດິນປ່າໄມ້ ໄປເປັນດິນອຸດສາຫະກຳ ເພື່ອນຳໃຊ້ເຂົ້າໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງຖ່ານຫີນ ຂອງບໍລິສັດ ຝົ້ງສາລີ ຈຽງເຊີນຟູໄຮ ບໍ່ແຮ່ ຈຳກັດ; ບົດລາຍງານຜົນການລົງຕິດຕາມກວດກາ ແລະ ການປະເມີນຄືນການຈັດຕັ້ງປະຕິບັດ, ການດຳເນີນງານຂອງບັນດາໂຄງການລົງທຶນພັດທະນາເຂື່ອນໄຟຟ້າພະລັງງານນ້ຳຢູ່ແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານກ່ຽວກັບການຂໍການພິຈາລະນາອອກມະຕິຮັບຮອງການຍົກເວັ້ນພາສີ, ອາກອນແລະຄ່າທຳນຽມຕ່າງໆ ໃນການຈັດຊື້ນ້ຳມັນເຊື້ອໄຟຮັບໃຊ້ວຽກງານປ້ອງກັນຊາດ ແລະ ການນຳພັກ-ລັດ ປະຈຳປີ 2024; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາໃຫ້ສືບຕໍ່ປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 238/ຄປຈ, ລົງວັນທີ 03 ສິງຫາ 2023 ກ່ຽວກັບການປັບຫຼຸດອັດຕາພາສີຂາເຂົ້ານ້ຳມັນ Naphtha ຈາກ 20% ມາເປັນ 5% ໃຫ້ບໍລິສັດ ຍອດງື່ມ ພາວເວີ ມະຫາຊົນ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການພິຈາລະນາຮັບຮອງ ແລະ ຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ ທີ່ຕິດພັນກັບໂຄງການເຂື່ອນໄຟຟ້ານ້ຳເງີນ 1 ຂອງບໍລິສັດ ໄຟຟ້ານ້ຳຕົກນ້ຳເງີນ 1 ຈຳກັດຜູ້ດຽວ; ຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານກ່ຽວກັບການສະເໜີຂໍຍົກເວັ້ນການປະຕິບັດບາງເນື້ອໃນຂອງກົດໝາຍທີ່ພົວພັນກັບໂຄງການພະລັງງານໄຟຟ້າແສງຕາເວັນແມ່ໂຂງ ພາວເວີ ຈຳກັດ.

**(ຂ່າວ: ນາງ ກຸກກິກ ບຸດດາໄຊ, ພາບ: ອານຸສອນ ພູມມີທອນ)**

# ກວດກາເນື້ອໃນຮອບດ້ານ 2 ຮ່າງກົດໝາຍ

(ສພຊ) - ວັນທີ 23-26 ກັນຍາ 2024 ທີ່ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ(ສະບັບປັບປຸງ)ແລະຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ແລະ ທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ; ມີຮອງປະທານກຳມາທິການຍຸຕິທຳ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ຄະນະຮັບຜິດຊອບປັບປຸງກົດໝາຍ 2 ສະບັບດັ່ງກ່າວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.



ຈຸດປະສົງແມ່ນເພື່ອຮັບປະກັນທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແລະຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີIX ໃຫ້ມີການຄົ້ນຄວ້າທີ່ເລິກເຊິ່ງ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນທີ່ ສປປລາວ ເປັນພາຄີ ແລະ ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ທັງເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການສ້າງ ແລະ ປັບປຸງກົດໝາຍ ກ່ອນນຳສະເໜີກອງປະຊຸມຄປຈສພຊຕົກລົງນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8.

ທ່ານ ຄຳເຜີດ ສິມວໍລະຈິດ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນແລະຄວາມຈຳເປັນຂອງການປັບປຸງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ທ່ານບຸນຍົງພົມເສນາ ຫົວໜ້າກົມກົດໝາຍຂອງສະພາແຫ່ງຊາດ ໄດ້ສະເໜີເນື້ອໃນຮ່າງກົດໝາຍດັ່ງກ່າວ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບແລະເປັນເຈົ້າການຄົ້ນຄວ້າ, ປະກອບຄຳເຫັນ ເພື່ອເຮັດໃຫ້ເນື້ອໃນມີຄວາມກະຈ່າງແຈ້ງ, ຮັດກຸມແລະແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນ; ຮັບປະກັນໃຫ້ການກຳນົດພາລະບົດບາດ, ສິດ ແລະໜ້າທີ່ຂອງອົງການໄອຍະການປະຊາຊົນ ໂດຍສະເພາະພາລະບົດບາດການຕິດຕາມກວດກາທົ່ວໄປ ມີຄວາມຊັດເຈນ, ຈະແຈ້ງ, ສາມາດຈັດຕັ້ງປະຕິບັດໄດ້ ແລະ ການດຳເນີນຄະດີໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ວ່ອງໄວ ແລະ ມີປະສິດທິຜົນກວ່າເກົ່າ ແນໃສ່ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ; ຮັບປະກັນການຕິດຕາມກວດກາ ແລະ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ເຊິ່ງເປັນການປະຕິບັດນະໂຍບາຍການຄຸ້ມຄອງລັດ ແລະ ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍເທື່ອລະກ້າວ.

ທ່ານບຸນຂວາງ ທະວິສຸກ ຮອງປະທານສານປະຊາຊົນສູງສຸດ ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນ ແລະ ຄວາມຈຳເປັນຂອງການປັບປຸງຮ່າງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ທ່ານ ບຸນຍົງ ພົມເສນາ ໄດ້ສະເໜີເນື້ອໃນຮ່າງກົດໝາຍດັ່ງກ່າວ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບແລະເປັນເຈົ້າການຄົ້ນຄວ້າ, ປະກອບຄຳເຫັນ ເພື່ອເຮັດໃຫ້ກົດໝາຍສະບັບນີ້ມີຄວາມຈະແຈ້ງ, ຮັດກຸມແລະແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນປັດຈຸບັນ; ເປັນເຄື່ອງມືທີ່ໜັກແໜ້ນໃຫ້ແກ່ສານປະຊາຊົນ ໃນການແກ້ໄຂຂໍ້ຂັດແຍ່ງ ຫຼື ການຮ້ອງຂໍທາງແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານ ໃຫ້ຖືກຕ້ອງຕາມຄວາມເປັນຈິງ, ສອດຄ່ອງກັບກົດໝາຍ ແລະ ມີຄວາມຍຸຕິທຳແນໃສ່ປົກປັກຮັກສາລະບອບເສດຖະກິດ-ສັງຄົມ, ປົກປ້ອງກຳມະສິດຂອງລັດ, ລວມໝູ່, ອົງການຈັດຕັ້ງ, ວິສາຫະກິດ, ສິດແລະຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ; ເພີ່ມທະວີນິຕິທຳ, ຈຳກັດແລະສະກັດກັ້ນການລະເມີດກົດໝາຍ, ສຶກສາອົບຮົມສະຕິເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ ເຊິ່ງເປັນການປະຕິບັດນະໂຍບາຍການຄຸ້ມຄອງລັດ ແລະ ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍເທື່ອລະກ້າວ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາ.

**(ນາງ ສຸພາວັນ ທອມສະນິດ)**



## ປະເມີນ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍການສຶກສາ ແລະ ກົດໝາຍວ່າດ້ວຍປ້າຍ ຈັດຂຶ້ນເມື່ອວັນທີ 18-20 ກັນຍາຜ່ານມາທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ບຸນຕາ ເທບພະວົງປະທານກຳມາທິການວັດທະນະທຳ-ສັງຄົມ, ທ່ານ ນາງ ໃບຄຳ ຂັດຕິຍະ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ), ທ່ານ ຮສ. ປອ. ພຸດ ສິມມາລາວົງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ (ສສກ), ທ່ານ ວັນສີ ກົວມົວ ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ), ທ່ານ ດຣ. ໄພວັນ ແກ້ວປະເສີດ ຮອງລັດຖະມົນຕີກະຊວງສາທາລະນະສຸກ (ສທ), ບັນດາທ່ານຜູ້ຕາງໜ້າຈາກກຳມາທິການຂອງ ສພຊ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງ.



ກົດໝາຍວ່າດ້ວຍແຮງງານ ໄດ້ປະກາດໃຊ້ ແລະ ຈັດຕັ້ງປະຕິບັດເປັນໄລຍະເວລາ 10 ປີກວ່າ, ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາເຫັນວ່າກະຊວງ ຮສສ ໄດ້ມີການຕິດຕາມກວດກາແລະປະເມີນຜົນການບັງຄັບໃຊ້ກົດໝາຍສະບັບນີ້, ໄດ້ຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີກ່ຽວກັບຂໍ້ຂັດແຍ່ງທາງດ້ານແຮງງານ, ເຈົ້າໜ້າທີ່ກວດກາແຮງງານກໍໄດ້ມີການດຳເນີນການກວດກາສະຖານທີ່ເຮັດວຽກເປັນປົກກະຕິເຊິ່ງການກວດການັ້ນແມ່ນເນັ້ນໃສ່ຫຼາຍດ້ານລວມທັງເງື່ອນໄຂການເຮັດວຽກ, ຄ່າຈ້າງ, ຊົ່ວໂມງເຮັດວຽກ ແລະ ມາດຕະຖານຄວາມປອດໄພຂອງອາຊີບ ແລະ ສຸຂະພາບ; ພ້ອມດຽວກັນນີ້, ກໍໄດ້ມີການເກັບກຳຂໍ້ມູນຢ່າງປົກກະຕິ ເພື່ອຮັບປະກັນໃຫ້ນາຍຈ້າງແລະລູກຈ້າງປະຕິບັດຕາມກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດໄວ້. ແຕ່ຄຽງຄູ່ກັບດ້ານດີທີ່ກ່າວມານັ້ນ, ກໍເຫັນວ່າການປະຕິບັດກົດໝາຍສະບັບດັ່ງກ່າວຍັງມີຂໍ້ຄົງຄ້າງແລະສິ່ງທ້າທາຍບາງດ້ານເປັນຕົ້ນ: ການຄຸ້ມຄອງແຮງງານຕ່າງປະເທດທີ່ເຂົ້າມາອອກແຮງງານຢູ່ ສປປລາວ ແລະ ການສົ່ງແຮງງານລາວໄປອອກແຮງງານຢູ່ຕ່າງປະເທດ ລວມທັງການພັດທະນາສີມືແຮງງານ ແລະ ອື່ນໆ ຍັງພົບກັບຄວາມຫຍຸ້ງຍາກຫຼາຍບັນຫາ ແລະ ຂາດການຕິດຕາມກວດກາປະເມີນຢ່າງຕໍ່ເນື່ອງ, ນາຍຈ້າງຈຳນວນຫຼາຍບໍ່ປະຕິບັດຕາມກົດໝາຍ ຫຼື ລະເມີດກົດໝາຍ ແລະ ອື່ນໆ.

ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໄດ້ປະກາດໃຊ້ ແລະ ຈັດຕັ້ງປະຕິບັດເປັນໄລຍະເວລາເກືອບ 10 ປີ ແລະ ຍັງບໍ່ໄດ້ຮັບການປັບປຸງ ຫຼື ດຳເນີນການປະເມີນຈັກຄັ້ງ ແລະ ໃນຊຸມປີຜ່ານມາ, ເຫັນວ່າສະພາບການຄວບຄຸມ, ຄຸ້ມຄອງ ແລະ ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ພົບກັບຄວາມຫຍຸ້ງຍາກຫຼາຍບັນຫາ, ຂາດການຕິດຕາມກວດກາຢ່າງຕໍ່ເນື່ອງແລະເຄື່ອງດື່ມທີ່ມີທາດເຫຼົ້ານີ້ ມີສ່ວນປະສົມຂອງເອຕາໂນນ (Ethanol), ການບໍລິໂພກ ຫຼື ດື່ມເກີນຂອບເຂດ ຈະສົ່ງຜົນຮ້າຍ ແລະ ຜົນກະທົບໂດຍກົງ ແລະ ທາງອ້ອມ ຕໍ່ສຸຂະພາບ, ຮ່າງກາຍຂອງມະນຸດ ແລະ ສົ່ງຜົນກະທົບໂດຍກົງຕໍ່ຄອບຄົວ, ເສດຖະກິດ-ສັງຄົມຂອງຊາດ ແລະ ເປັນສາເຫດທີ່ກໍໃຫ້ເກີດພະຍາດຊຳເຮື້ອ, ພາໃຫ້ເກີດອຸປະຕິເຫດ, ອາຊະຍາກຳ, ຄວາມບໍ່ເປັນລະບຽບຮຽບຮ້ອຍ ແລະ ບັນຫາອື່ນໆ.

ກົດໝາຍວ່າດ້ວຍການສຶກສາສະບັບປັດຈຸບັນ ປະກາດໃຊ້ແລະຈັດຕັ້ງປະຕິບັດເປັນໄລຍະເວລາ 9 ປີກວ່າ, ຜ່ານການຈັດຕັ້ງປະຕິບັດເຫັນວ່າກະຊວງ ສສກ ໄດ້ເອົາໃຈໃສ່ຕິດຕາມກວດກາແລະຊຸກຍູ້ໃຫ້ທຸກພາກສ່ວນຂອງສັງຄົມ, ຜູ້ບໍລິຫານການສຶກສາ, ຄູແລະພະນັກງານບໍລິຫານຂອງສະຖານການສຶກສາທັງພາກລັດ ແລະ ເອກະຊົນເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ພ້ອມທັງໄດ້ອອກນິຕິກຳໃຕ້ກົດໝາຍຈຳ ນວນໜຶ່ງ ເພື່ອເຮັດໃຫ້ການຄຸ້ມຄອງວຽກງານການສຶກສາມີປະສິດທິພາບ, ປະສິດທິຜົນ. ເຖິງຢ່າງໃດກໍຕາມ, ການ ຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ຍັງມີຄວາມຫຍຸ້ງຍາກ ແລະ ພົບກັບຫຼາຍບັນຫາເປັນຕົ້ນ: ການຈັດຕັ້ງປະຕິບັດນະໂຍບາຍຖືເອົາການສຶກສາພາກບັງຄັບເປັນກາສຶກສາບໍ່ໄດ້ເສຍຄ່າໃນສະຖານການສຶກສາຂອງລັດ, ການຈັດຕັ້ງປະຕິບັດຕົວຈິງເຫັນວ່າມີໂຮງຮຽນຈຳນວນໜຶ່ງໄດ້ເກັບເງິນນຳນັກຮຽນເພື່ອຮັບໃຊ້ວຽກງານບໍລິຫານໂຮງຮຽນ ແລະ ນຳໃຊ້ເຂົ້າໃນການຮຽນ-ການສອນ; ສິດໄດ້ຮັບການສົ່ງເສີມສຸຂະພາບ ແລະ ການປິ່ນປົວຂັ້ນພື້ນຖານໂດຍບໍ່ເສຍຄ່າສຳລັບການສຶກສາພາກບັງຄັບ, ພາກປະຕິບັດຕົວຈິງ ຍັງປະຕິບັດບໍ່ໄດ້ຢ່າງທົ່ວເຖິງ; ອັດຕາການປະລະຂອງຄູ ແລະ ນັກຮຽນຂອງການສຶກສາພາກບັງຄັບເຫັນວ່າເພີ່ມຂຶ້ນທຸກໆປີເມື່ອສົມທຽບໃສ່ໄລຍະປີ 2017 ເຊິ່ງສາເຫດມາຈາກສະ ພາບເສດຖະກິດ, ຄວາມຮັບຜິດຊອບຂອງຄອບຄົວ ແລະ ສັງຄົມ; ການລົງໂຄສະນາເຜີຍແຜ່ກົດໝາຍຍັງມີຂີດຈຳກັດ; ງົບປະມານແຫ່ງລັດທີ່ກຳນົດໃຫ້ຂະແໜງ ສສກ ບັນລຸ 18 ສ່ວນຮ້ອຍຂຶ້ນໄປ, ເຫັນວ່າການຈັດຕັ້ງປະຕິບັດຕົວຈິງ ຍັງບໍ່ທັນບັນລຸຕາມຄາດໝາຍທີ່ວາງໄວ້; ອາຄານໂຮງຮຽນ ແລະ ຫໍພັກຂອງສະຖານການສຶກສາຈຳນວນໜຶ່ງ ຍັງບໍ່ພຽງພໍ ແລະ ຫໍພັກບາງໂຮງຮຽນແມ່ນສ້າງຂຶ້ນຊົ່ວຊາ ບໍ່ຮັບປະກັນຄວາມປອດໄພໃຫ້ແກ່ນັກຮຽນ.

ກົດໝາຍວ່າດ້ວຍປ້າຍ ປະກາດໃຊ້ແລະຈັດຕັ້ງປະຕິບັດເປັນໄລຍະເວລາ6ປີກວ່າ,ຜ່ານການຈັດຕັ້ງປະຕິບັດເຫັນວ່າ ກະຊວງ ຖວທ ໄດ້ເອົາໃຈໃສ່ຕິດຕາມກວດກາແລະຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍຈຳນວນໜຶ່ງເພື່ອເຮັດໃຫ້ການຄຸ້ມຄອງວຽກງານປ້າຍ ມີປະສິດທິພາບ, ປະສິດທິຜົນ; ເຖິງແນວໃດກໍຕາມ, ຜ່ານການຈັດຕັ້ງປະຕິບັດຕົວຈິງ ກໍຍັງເຫັນວ່າມີຄວາມຫຍຸ້ງຍາກ ແລະ ພົບກັບຫຼາຍບັນຫາ ເປັນຕົ້ນ: ຜູ້ປະກອບການຈຳນວນໜຶ່ງຍັງບໍ່ຮັບຮູ້ ແລະ ເຂົ້າໃຈຕໍ່ເນື້ອໃນກົດໝາຍ ໂດຍສະເພາະແມ່ນການດຳເນີນທຸລະກິດກ່ຽວກັບປ້າຍ, ການເກັບຄ່າທຳນຽມ ແລະ ຄ່າບໍລິການປ້າຍ ຍັງບໍ່ທັນໄດ້ກຳນົດຈະແຈ້ງ ແລະ ເປັນເອກະພາບກັນ, ງົບປະມານ ແລະ ອຸປະກອນຮັບໃຊ້ໃນການປະຕິບັດໜ້າທີ່ວຽກງານໃນການລົງໂຄສະນາເຜີຍແຜ່ກົດໝາຍ ຍັງມີຈຳກັດ ແລະ ບັນຫາອື່ນໆ.



ທ່ານຄຳໃບດຳລັດກ່າວວ່າ: ຄະນະປະຈຳສະພາແຫ່ງຊາດໄດ້ຕົກລົງໃຫ້ຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຈັດກອງປະຊຸມຮ່ວມກັບ 4 ກະຊວງຄື: ແຮງງານແລະສະຫວັດດີການສັງຄົມ, ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ແລະ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຮັບຟັງການລາຍງານຜົນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍການສຶກສາ ແລະ ກົດໝາຍວ່າດ້ວຍປ້າຍ ໃນໄລຍະຜ່ານມາເພື່ອເປັນການສະຫຼຸບ, ຖອດຖອນບົດຮຽນໃຫ້ແກ່ການຈັດຕັ້ງປະຕິບັດສີ່ກົດໝາຍດັ່ງກ່າວ ໂດຍຍົກໃຫ້ເຫັນດ້ານຕັ້ງໜ້າ, ດ້ານຄົງຄ້າງ, ສາເຫດທີ່ພາໃຫ້ມີຜົນກະທົບຕໍ່ການຈັດຕັ້ງປະຕິບັດ ເພື່ອຍົກສູງຄຸນນະພາບຂອງການຈັດຕັ້ງປະຕິບັດກົດໝາຍ, ເຮັດໃຫ້ສະຕິເຄົາລົບກົດໝາຍທົ່ວສັງຄົມສູງຂຶ້ນເທື່ອລະກ້າວ; ພ້ອມນີ້ກໍໃຫ້ເຫັນໄດ້ບັນຫາທີ່ພາໃຫ້ມີດ້ານອ່ອນ, ຂໍ້ຄົງຄ້າງ, ສິ່ງທ້າທາຍ, ສາເຫດທີ່ພາໃຫ້ມີດ້ານອ່ອນ,ຂໍ້ຄົງຄ້າງແລະສະເໜີທິດທາງປັບປຸງແກ້ໄຂກົດໝາຍ 4 ສະບັບນີ້ໃນຕໍ່ໜ້າ ເຊິ່ງທັງໝົດນີ້ ຄະນະຮັບຜິດຊອບຈະໄດ້ນຳໄປຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ສະຫຼຸບລາຍງານຜົນຂອງການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຄັ້ງນີ້ເພື່ອນຳເອົາໄປລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ.



ທີ່ກອງປະຊຸມ, ທ່ານພິງໄຊສັກ ອິນຖາລາດ ຮອງລັດຖະມົນຕີກະຊວງ ຮສສ ໄດ້ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານ, ທ່ານ ດຣ. ໄພວັນ ແກ້ວປະເສີດ ໄດ້ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ທ່ານ ຮສ. ປອ. ພຸດ ສິມມາລາວົງ ໄດ້ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສຶກສາ, ທ່ານ ວັນສີ ກົວມົວ ໄດ້ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ້າຍ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຢ່າງກົງ ໄປກົງມາ, ມີລັກສະນະສ້າງສັນ ເພື່ອຊອກໃຫ້ເຫັນໄດ້ດ້ານດີ, ຜົນງານ, ຂໍ້ຄົງຄ້າງ, ສາເຫດ ແລະ ວິທີແກ້ໄຂໃນຕໍ່ໜ້າ ເພື່ອໃຫ້ກະຊວງທີ່ກ່ຽວຂ້ອງນຳໄປຄົ້ນຄວ້າພິຈາລະນາປັບປຸງ ເພື່ອກະກຽມລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ທີ່ຈະໄຂຂຶ້ນໃນທ້າຍປີນີ້.

**(ສອນສັກ ວັນວິໄຊ)**

# ປະທານສະພາປະຊາຊົນແຂວງຫຼວງນ້ຳທາ ສືບຕໍ່ມອບເຄື່ອງຊ່ວຍເຫຼືອໄພນ້ຳຖ້ວມ



(ສພຂ) - ໄພນ້ຳຖ້ວມແຂວງຫລວງນ້ຳທາເຮັດໃຫ້ປະຊາຊົນຈຳນວນຫຼາຍບ້ານໄດ້ຮັບຜົນກະທົບທັງຊັບສິນມີຄ່າ, ຜົນຜະລິດ, ສັດລ້ຽງ, ລົດລາງພາຫະນະຕ່າງໆເສຍຫາຍຢ່າງຫຼວງຫຼາຍ ມາໃນວັນທີ 17-18 ກັນຍາ 2024, ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ, ທ່ານ ພົຕ.ປອ. ວົງສັກ ພົນທະວົງ ຄະນະປະຈຳສະພາແຫ່ງຊາດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແຂວງຫຼວງນ້ຳທາ ພ້ອມດ້ວຍການນຳຂັ້ນແຂວງ ແລະ ຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ແລະ, ໄດ້ສືບຕໍ່ມອບອາຫານແຫ້ງ, ເຄື່ອງນຸ່ງຮົ່ມ ແລະ ນ້ຳດື່ມ ໃຫ້ປະຊາຊົນທີ່ຖືກຜົນກະທົບຈາກໄພພິບັດນ້ຳຖ້ວມຢູ່ຫຼາຍຈຸດຄື: ບ້ານຫຼວງ 492 ຄອບຄົວທີ່ຖືກຜົນກະທົບ, ບ້ານຂອນ 385 ຄອບຄົວ, ບ້ານດອນຄູນ 249 ຄອບຄົວ ແລະ ບ້ານນ້ຳແງ້ນ 04 ຄອບຄົວ; ບ້ານວຽງເງິນ, ວຽງທອງ, ວຽງເໜືອ, ປ່າປົວະ, ນ້ຳທຸງ-ຫ້ວຍຂີງ, ທົ່ງໄຈ້ເໜືອ, ທົ່ງໄຈ້ໃຕ້, ຫົວນາ ແລະ ບ້ານນ້ຳດີ ທັງໝົດຈຳນວນ 814 ຄອບຄົວ; ບ້ານວຽງໃຕ້ ຈຳນວນ 149 ຄອບຄົວ, ບ້ານວຽງເໜືອ 291 ຄອບຄົວ, ບ້ານດອນສຳພັນ 206 ຄອບຄົວ ແລະ ບ້ານໂພນໄຊ 50 ຄອບຄົວ ທັງນີ້, ກໍເພື່ອເປັນການໃຫ້ກຳລັງໃຈ ແລະ ບັນເທົາທຸກເບື້ອງຕົ້ນ ໃຫ້ແກ່ປະຊາຊົນຜູ້ທີ່ຖືກຜົນກະທົບ ແລະ ຍັງຈະໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອຕື່ມອີກໃນຫຼາຍບ້ານ ທີ່ປະສົບໄພທີ່ໄດ້ຮັບຜົນເສຍຫາຍໃນຄັ້ງນີ້ໃຫ້ທົ່ວເຖິງ.

ຫຼັງຈາກນັ້ນ, ທ່ານ ພົຕ. ປອ. ວົງສັກ ພົນທະວົງ ຄະນະປະຈຳສະພາແຫ່ງຊາດສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແຂວງຫລວງນ້ຳທາ ແລະ ພ້ອມດ້ວຍຄະນະກອງທຶນຊ່ວຍເຫຼືອສັງຄົມ ຂອງສະພາແຫ່ງຊາດ ໄດ້ມອບເຄື່ອງຊ່ວຍເຫລືອແກ່ຜູ້ປະສົບໄພນ້ຳຖ້ວມຢູ່ ແຂວງຫຼວງນ້ຳທາ ປະກອບມີ ເຂົ້າສານ, ອາຫານແຫ້ງ, ເຄື່ອງນຸ່ງຫົ່ມ, ນ້ຳດື່ມ ແລະ ເຄື່ອງໃຊ້ສອຍຕ່າງໆ ລວມມູນຄ່າ 1,751,500,000 (ໜຶ່ງຕື້ເຈັດຮ້ອຍຫ້າສິບເອັດລ້ານຫ້າແສນກີບ) ໂດຍຕາງໜ້າການນຳຂອງແຂວງຮັບເຄື່ອງຊ່ວຍເຫຼືອຄັ້ງນີ້ແມ່ນ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ.

**(ວັນນີ ແຝງບົວວັນ)**

# ມອບລາງວັນການແຂ່ງຂັນ ອອກແບບໂລໂກກອງປະຊຸມໄອປາ



(ສພຊ) - ວັນທີ 20 ກັນຍາ 2024 ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບລາງວັນໃຫ້ແກ່ຜູ້ຊະນະການປະກວດແຂ່ງຂັນອອກແບບເຄື່ອງໝາຍຫຼືໂລໂກ (logo) ຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45 ທີ່ສະພາແຫ່ງຊາດລາວ ຈະເປັນເຈົ້າພາບໃນເດືອນຕຸລານີ້, ຕາງໜ້າໃຫ້ແກ່ສະພາແຫ່ງຊາດ ກໍຄືຄະນະຮັບຜິດຊອບອອກແບບໂລໂກໄອປາ45 ມອບລາງວັນໃຫ້ແກ່ຜູ້ຊະນະໃນການປະກວດ ໂດຍທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ຫົວໜ້າອະນຸກຳມະການກອງເລຂາແຫ່ງຊາດໄອປາ 45 ເຊິ່ງມີຜູ້ແຂ່ງຂັນ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ເຂັມພອນ ອາໂນໄທ ຫົວໜ້າກົມພົວພັນລັດຖະສະພາຫຼາຍຝ່າຍ ໄດ້ລາຍງານໃຫ້ຮູ້ວ່າ: ກຳມາທິການການຕ່າງປະເທດກໍຄືຄະນະຮັບຜິດຊອບການອອກແບບໂລໂກໄອປາ 45 ໄດ້ມີການຄົ້ນຄວ້າກຳນົດຂອບເນື້ອໃນ, ຮູບແບບ ແລະ ເງື່ອນໄຂຂອງໂລໂກໃຫ້ສອດຄ່ອງກັບຈຸດປະສົງ, ເປົ້າໝາຍ ແລະ ຫົວຂໍ້ຂອງກອງປະຊຸມໄອປາ; ຈາກນັ້ນ, ໄດ້ສະເໜີຄະນະເລຂາທິການສະພາແຫ່ງຊາດ ອອກແຈ້ງການຜ່ານທາງເວັບໄຊ ແລະ ສື່ອອນລາຍຕ່າງໆ ເຖິງບັນດາຫ້າງຮ້ານ, ບໍລິສັດແລະບຸກຄົນທີ່ສົນໃຈແລະມີເງື່ອນໄຂເໝາະສົມ ເຂົ້າຮ່ວມການແຂ່ງຂັນ. ຜ່ານການແຂ່ງຂັນ, ສາມາດຄັດເລືອກຜູ້ຊະນະໄດ້ແກ່ທ່ານ ສອນໄຊ ແກ້ວມະນີ.

ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ພ້ອມທັງກ່າວວ່າ: ການອອກແບບຄັ້ງນີ້ເປັນການປະກອບສ່ວນຢ່າງໃຫຍ່ຫຼວງໃຫ້ແກ່ການເປັນເຈົ້າພາບທີ່ດີຂອງປະຊາຊົນລາວ ກໍຄືບັນດາຫ້າງຮ້ານ, ບໍລິສັດ ທັງພາກລັດແລະເອກະຊົນທັງເປັນການສະແດງໃຫ້ເຫັນເຖິງຫົວຄິດປະດິດສ້າງ ແລະ ຄວາມອາດສາມາດໃນການສ້າງ ແລະ ອອກແບບຂອງປະຊາຊົນລາວກໍຄືຊາວໜຸ່ມໄວໜຸ່ມລາວ ເຊິ່ງການອອກແບບຄັ້ງນີ້ ຈະຖືກນຳໃຊ້ເຂົ້າໃນກອງປະຊຸມສະ ມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ45 ທີ່ສະພາແຫ່ງຊາດລາວເປັນເຈົ້າພາບ ແລະ ຈະຖືກເກັບໄວ້ໃນຫ້ອງມູນເຊື້ອ ແລະ ປະຫວັດສາດຂອງສະພາແຫ່ງຊາດ ເພື່ອໃຫ້ຄົນຮຸ່ນຫຼັງໄດ້ເຫັນເຖິງຜົນງານການອອກແບບໃນຄັ້ງນີ້.

**(ນາງ ອາລິນ ສຸພົມມະປະດິດ)**



## ປຶກສາຫາລື...

(ຕໍ່ຈາກໜ້າ 1)

ຂອງ ສພຊ, ກຳມະການຂອງກຳມາທິການບັນດາເຜົ່າ (ກບຜ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ຮອງລັດຖະມົນຕີ, ຮອງປະທານ, ຫົວໜ້າ-ຮອງຫົວໜ້າກົມ ແລະ ຫ້ອງການ, ພະນັກງານ-ລັດຖະກອນຈາກກະຊວງ-ອົງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ພົທ. ສຸວອນ ເລືອງບຸນມີ ມີຄຳເຫັນວ່າ: ໃນໄລຍະຜ່ານ ຂະແໜງການທີ່ກ່ຽວຂ້ອງກັບວຽກງານສາສະໜາ ໄດ້ຈັດກອງປະຊຸມປະຈຳປີ, ເຝິກອົບຮົມ, ສຳມະນາ ແລະ ລົງຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດານິຕິກຳກ່ຽວຂ້ອງມາແລ້ວຫຼາຍຄັ້ງກໍຕາມ; ແຕ່ເຫັນວ່າບັນຫາປາກົດການຫຍໍ້ທໍ້ທາງສາສະໜາ ກໍຍັງເກີດຂຶ້ນເລື້ອຍໆ, ມີລັກສະນະແຜ່ຂະຫຍາຍເປັນວົງກວ້າງ ແລະ ເລິກແລບກວ່າເກົ່າ. ພ້ອມກັນນັ້ນ, ການແກ້ໄຂບັນຫາປາກົດການຫຍໍ້ທໍ້ທາງສາສະໜາຂອງອົງການປົກຄອງທ້ອງຖິ່ນຫຼາຍບ່ອນຍັງບໍ່ມີຄວາມເປັນເອກະພາບ, ບໍ່ໄປຕາມນິຕິກຳທີ່ໄດ້ກຳນົດໄວ້ ແລະ ຍັງບໍ່ມີລະບຽບຫຼັກການທີ່ຊັດເຈນ.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບການຄຸ້ມຄອງ, ປົກປ້ອງການຈັດຕັ້ງແລະເຄື່ອນໄຫວຂອງສາສະໜາ; ແລກປ່ຽນບົດຮຽນ ແລະ ທັດສະນະຂອງພາກສ່ວນກ່ຽວຂ້ອງໃນການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆທາງສາສະໜາແລະການຈັດຕັ້ງຜັນຂະຫຍາຍບັນດານິຕິກຳກ່ຽວຂ້ອງກັບວຽກງານສາສະໜາຂອງກະຊວງແລະອົງການກ່ຽວຂ້ອງຂັ້ນສູນກາງໃນໄລຍະຜ່ານມາ ເປັນຕົ້ນ: ຜົນການຈັດຕັ້ງປະຕິບັດດຳລັດ 315/ລບ, ລົງວັນທີ 16/8/2016 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປົກປ້ອງ ແລະ ຄຸ້ມຄອງການເຄື່ອນໄຫວສາສະໜາ ຢູ່ ສປປລາວ ສະບັບເລກທີ 16/ພນ, ລົງວັນທີ 09/11/2016 (ກະຊວງພາຍໃນ); ຜົນການຕິດຕາມກວດກາການເຄື່ອນໄຫວວຽກງານສາສະໜາ ຕາມດຳລັດ 315/ລບ, ລົງວັນທີ 16/8/2016 ໄລຍະຜ່ານມາ (ກບຜ); ການຄຸ້ມຄອງອົງການຈັດຕັ້ງ NGOs ກັບການເຄື່ອນໄຫວສາສະໜາໄລຍະຜ່ານມາ (ກະຊວງການຕ່າງປະເທດ); ວຽກງານສາສະໜາ ແລະ ຄວາມໝັ້ນຄົງຂອງຊາດ (ຄະນະກຳມະການ ປກຊ-ປກສສູນກາງ); ວຽກງານກໍ່ສ້າງຮາກຖານການເມືອງກັບການເຄື່ອນໄຫວສາສະໜາ (ກົມກໍ່ສ້າງຮາກຖານການເມືອງ, ກະຊວງປ້ອງກັນປະເທດ); ບາງທັດສະນະໃນການແກ້ໄຂປາກົດການຫຍໍ້ທໍ້ທາງດ້ານສາສະໜາໃນໄລຍະຜ່ານມາ (ສະຫະພັນນັກຮົບເກົ່າແຫ່ງຊາດລາວ); ບາງບົດຮຽນໃນການແກ້ໄຂປາກົດການຫຍໍ້ທໍ້ທາງດ້ານສາສະໜາໃນໄລຍະຜ່ານມາ (ກົມໃຫຍ່ສັນຕິບານ, ກະຊວງປ້ອງກັນຄວາມສະຫງົບ). ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາປະກອບຄຳຄິດຄຳເຫັນເອກະພາບ ແລະ ໄປລວງດຽວກັນພ້ອມທັງຊອກທິດທາງແລະວິທີການ ເພື່ອເປັນຂໍ້ມູນໃນການກຳນົດຫຼັກການ ກໍຄືນິຕິກຳທີ່ເປັນບ່ອນອີງໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຍ້ອນການເຊື່ອຖືສາສະໜາ ໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວແນໃສ່ເຮັດໃຫ້ສາສະນິກະຊົນຈະໄດ້ດຳລົງຊີວິດດ້ວຍຄວາມສາມັກຄີປອງດອງ, ເປັນກຳລັງແຮງໃນການພັດທະນາປະເທດຊາດ.

**(ຂ່າວ: ນາງອາລິນ ສຸພົມມະປະດິດ, ພາບ: ອານຸສອນ ພູມມີທອນ)**



## ຮອງປະທານ...

(ຕໍ່ຈາກໜ້າ 2)

ການທີ່ກ່ຽວຂ້ອງຂອງແຂວງ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກພະແນກການ ຄື: ໂຍທາທິການ ແລະ ຂົນສົ່ງ, ແຜນການ ແລະ ການລົງທຶນ, ພະລັງງານແລະບໍ່ແຮ່, ການເງິນ ແລະ ພາກສ່ວນຂອງສະມາຄົມຂົນສົ່ງແລະຈັດສົ່ງສິນຄ້າ-ໂດຍສານ ແຂວງຄຳມ່ວນ ເຊິ່ງຍົກໃຫ້ເຫັນດ້ານດີ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງ ແລະ ການພັດທະນາຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນເຊື່ອມຈອດເຂົ້າສູ່ແລວທາງເສດຖະກິດຢູ່ແຂວງຄຳມ່ວນໃນໄລຍະຜ່ານມາ; ຈາກນັ້ນ, ກໍໄດ້ມີການແລກປ່ຽນຄຳຄິດຄຳເຫັນ ແລະ ມີຄຳຊັກຖາມເຈາະຈີ້ມໂດຍກົງຕໍ່ບັນດາພະແນກການ ເພື່ອເປັນຂໍ້ມູນຮອບດ້ານນຳໄປຄົ້ນຄວ້າຊຸກຍູ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ພາຍຫຼັງສຳເລັດກອງປະຊຸມ, ກໍໄດ້ລົງຕິດຕາມກວດກາພາກສະໜາມເສັ້ນທາງຫຼວງແຫ່ງຊາດເລກທີ11 (ເມືອງທ່າແຂກ-ເມືອງໜອງບົກ), ເສັ້ນທາງເມືອງບົວລະພາ-ຂົວຂ້າມນໍ້າ, ເສັ້ນທາງຫຼວງແຫ່ງຊາດເລກທີ 12 (ເມືອງທ່າແຂກ-ດ່ານພາສີສາກົນນາເຜົ້າ), ເສັ້ນທາງເລກທີ 1E.

ທ່ານ ປອ. ເກດແກ້ວ ສີຫາລາດແລະທ່ານນາງບົງອອນ ໄຊຍະສິດ ພ້ອມດ້ວຍຄະນະ ໄດ້ສືບຕໍ່ເຄື່ອນໄຫວວຽກງານຢູ່ດ່ານພາສີສາກົນນາເຜົ້າເມືອງບົວລະພາ ໂດຍໄດ້ເຮັດວຽກຮ່ວມກັບທ່ານ ພັທ. ພົມມະນີ ໄຊຍະລາດ ຫົວໜ້າຄຸ້ມຄອງດ່ານດັ່ງກ່າວ ແລະ ຄະນະ ເຊິ່ງໄດ້ຮັບຟັງການລາຍງານໂດຍສັງເຂບຈາກທ່ານ ພັທ. ພົມມະນີ ໄຊຍະລາດ ກ່ຽວກັບການຄຸ້ມຄອງຄົນເຂົ້າ-ອອກເມືອງ ແລະ ສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຄຸ້ມຄອງວຽກງານຢູ່ດ່ານດັ່ງກ່າວ ເປັນຕົ້ນ: ການຄຸ້ມຄອງ ແລະ ກວດກາສິນຄ້າ, ລົດຂົນສົ່ງສິນຄ້າ, ການຂົນສົ່ງສິນຄ້າຜ່ານແດນທີ່ເຂົ້າ-ອອກດ່ານ, ການປ່ຽນຖ່າຍຫົວລາກ, ຫາງລາກ; ຈາກນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ຂໍ້ຄົງຄ້າງທີ່ຕ້ອງຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ທັນສະໄໝ ໃນການອຳນວຍຄວາມສະດວກທາງດ້ານການຄ້າກໍຄືລະບົບການແຈ້ງພາສີແບບເອເລັກໂຕຣນິກ ເຂົ້າສູ່ການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າຢູ່ດ່ານພາສີສາກົນນາເຜົ້າໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍທີ່ໄດ້ກຳນົດໄວ້.

ການເຄື່ອນໄຫວວຽກງານຄັ້ງນີ້ ແມ່ນເພື່ອຕິດຕາມກວດກາ, ເກັບກຳຂໍ້ມູນຕົວຈິງໃນການຈັດຕັ້ງປະຕິບັດງົບປະມານລົງທຶນປີ 2024 ເຂົ້າໃນການກໍ່ສ້າງ ແລະ ສ້ອມແປງບັນດາໂຄງການພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ເປັນຕົ້ນ: ດ່ານສາກົນ, ເສັ້ນທາງ, ຂົວຕາມເສັ້ນທາງສາຍຫຼັກໃນການເຊື່ອມຈອດ ແລະ ການອຳນວຍຄວາມສະດວກດ້ານການຂົນສົ່ງສິນຄ້າ, ໂດຍສານແລະເກັບກຳຂໍ້ມູນຂອງສະມາຄົມລົດຂົນສົ່ງພາຍໃນແຂວງ ທັງເປັນການເສີມຂະຫຍາຍ, ຊຸກຍູ້ສົ່ງເສີມການຈັດຕັ້ງວຽກງານດັ່ງກ່າວ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ; ພ້ອມກັນນັ້ນ ກໍເພື່ອລາຍງານຜົນການຕິດຕາມກວດກາຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄຂຂຶ້ນໃນທ້າຍປີນີ້.

**(ເອື້ອ ມະໂນສິງ)**



## ເປີດຫ້ອງມູນເຊື້ອ...

(ຕໍ່ຈາກໜ້າ 1)

VIII, ທ່ານ ທອງສິງ ທຳມະວົງ ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານສະພາແຫ່ງຊາດຊຸດທີ VI, ອະດີດນາຍົກລັດຖະມົນຕີ, ບັນດາທ່ານຮອງປະທານສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານສະພາປະຊາຊົນຂັ້ນແຂວງ, ປະທານ ແລະ ຮອງປະທານ ກຳມາທິການ, ສະມາຊິກສະພາແຫ່ງຊາດ, ອະດີດການນຳຂັ້ນສູງຂອງສະພາແຫ່ງຊາດ, ບັນດາການນຳຂອງອົງການຈັດຕັ້ງພັກ-ລັດຂັ້ນສູນກາງ ພ້ອມດ້ວຍແຂກຖືກເຊີນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີອັນມີຄວາມໝາຍຄວາມສຳຄັນນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນກ່າວເປີດພິທີ ເຊິ່ງທ່ານໄດ້ເນັ້ນໜັກວ່າ: ນັບແຕ່ສະພາປະຊາຊົນສູງສຸດຊຸດທີ I ມາເຖິງສະພາແຫ່ງຊາດຊຸດທີIXອົງການນິຕິບັນຍັດໄດ້ມີການຈັດຕັ້ງ ແລະ ເຄື່ອນໄຫວຕາມພາລະບົດບາດ , ສິດ ແລະ ໜ້າທີ່ຂອງຕົນຢ່າງຫ້າວຫັນໃນຕະຫຼອດໄລຍະ49 ປີທີ່ຜ່ານມາ, ສະພາແຫ່ງຊາດ ໄດ້ຕັ້ງໜ້າປັບປຸງຕົນເອງໃຫ້ມີຄວາມເຂັ້ມແຂງເປັນກ້າວໆ, ເປັນເຈົ້າການໃນການປະຕິບັດພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນຕາມ ລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນແມ່ນການຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍ, ນະໂຍບາຍ ແລະ ມະຕິຕ່າງໆຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກໍຄືແຜນຍຸດທະສາດໃນການສ້າງສາພັດທະນາປະເທດຊາດ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ກ່າວຕື່ມວ່າ: ຍ້ອນເຫັນໄດ້ຄວາມສຳຄັນໃນການຈັດຕັ້ງ ແລະ ເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ເພື່ອເປັນມໍລະດົກສືບທອດໃຫ້ແກ່ຄົນຮຸ່ນຫຼັງ, ຄະນະປະຈຳສະພາແຫ່ງຊາດ ຈຶ່ງໄດ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳການຂຽນເນື້ອໃນ, ຄັດເລືອກວັດຖຸພັນ ແລະ ຈັດວາງສະແດງໃນຫ້ອງ ມູນເຊື້ອສະພາແຫ່ງຊາດແຫ່ງນີ້, ການຄັດເລືອກ ແລະທ້ອນໂຮມວັດຖຸພັນ ແມ່ນມີຄວາມຫຍຸ້ງຍາກພໍສົມຄວນ ເນື່ອງຈາກໄລຍະຜ່ານມາ ມີການເຄື່ອນຍ້າຍເຄື່ອງຂອງວັດຖຸພັນຈາກຫໍສະພາຜູ້ແທນລາສະດອນ, ມີການເຄື່ອນ ຍ້າຍເຄື່ອງຂອງວັດຖຸພັນໃນໄລຍະການປຸກສ້າງຫໍສະພາແຫ່ງຊາດຫຼັງໃໝ່ແລະຄວາມຈຳກັດດ້ານສະຖານທີ່ເກັບ ມ້ຽນຮັກສາວັດຖຸພັນ ເຊິ່ງໄດ້ເຮັດໃຫ້ວັດຖຸພັນຈຳນວນໜຶ່ງມີການຕົກເຮ່ຍເສຍຫາຍ.

ເພື່ອເຮັດໃຫ້ຫ້ອງມູນເຊື້ອມີວັດຖຸພັນ, ຂໍ້ມູນຄົບຖ້ວນກວ່າກ່ໍາ, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ຮຽກຮອງບັນດາທ່ານຄະນະນຳຂັ້ນສູງ ແລະ ແຂກທີ່ເຂົ້າຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ ຈົ່ງຊ່ວຍປະກອບຄຳຄິດເຫັນຢ່າງກົງໄປກົງມາກ່ຽວກັບເນື້ອໃນການບັນລະຍາຍ, ການຈັດວາງສະແດງວັດຖຸພັນ ແລະ ຮູບພາບປະກອບການເຄື່ອນໄຫວວຽກງານລວມຂອງສະພາແຫ່ງຊາດໃນແຕ່ລະພາກ ເພື່ອເປັນການລະດົມຄວາມຮູ້, ຂໍ້ມູນ ແລະ ບົດຮຽນອັນດີໃນການແກ້ໄຂປັບປຸງບັນດາຂໍ້ມູນ, ຮູບພາບ ແລະ ວັດຖຸພັນເຊິ່ງຫ້ອງມູນເຊື້ອຍັງຂາດເຂີນຢູ່ ແລະ ສະໜອງວັດຖຸພັນ ຫຼື ເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອມາປັບປຸງຫ້ອງມູນເຊື້ອໃຫ້ມີຄວາມສົມບູນຍິ່ງຂຶ້ນ.

ການສ້າງຕັ້ງຫ້ອງມູນເຊື້ອຂອງສະພາແຫ່ງຊາດໃຫ້ເປັນລະບົບຄົບຊຸດ ຈະເປັນການອຳນວຍຄວາມສະດວກໃນການຄຸ້ມຄອງ, ບູລະນະ, ປົກປັກຮັກສາ ແລະຕິດຕາມກວດກາຕໍ່ວັດຖຸພັນເຄົ້າເດີມ ແລະວັດຖຸພັນທີ່ມີຄຸນຄ່າສູງ ເພື່ອເປັນມໍລະດົກໃຫ້ແກ່ລູກຫຼານໃນຕໍ່ໜ້າ. ເນື້ອໃນຂອງຫ້ອງມູນເຊື້ອສະພາແຫ່ງຊາດ ໄດ້ຈັດວາງສະແດງເປັນ 4 ພາກຄື: ພາກທີ 1 ໄລຍະຕໍ່ສູ້ກູ້ຊາດ, ພາກທີ2ການເຄື່ອນໄຫວວຽກງານລວມຂອງສະພາປະຊາຊົນ ສູງສຸດຊຸດທີ I ຫາສະພາແຫ່ງຊາດຊຸດທີ VIII, ພາກທີ 3 ການເຄື່ອນໄຫວວຽກງານລວມຂອງສະພາແຫ່ງຊາດຊຸດທີ IX, ພາກທີ 4 ການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**





## ມອບ-ຮັບເງິນ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 23 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເງິນຈຳນວນ 50 ລ້ານກີບ ເພື່ອນຳໄປມອບຕໍ່ໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກອຸທົກກະໄພຢູ່ບັນດາແຂວງພາກເໜືອ ແລະ ພາກໃຕ້; ຕາງໜ້າມອບໂດຍທ່ານ ໂພໄຊ ໄຊຍະສອນ ລັດຖະມົນຕີກະຊວງພະລັງງານ ແລະບໍ່ແຮ່, ຕາງໜ້າຮັບໂດຍທ່ານ ບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ເຊິ່ງມີທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ທ່ານ ຄຳໃບ ດຳລັດ ໄດ້ແຈ້ງໃຫ້ຊາບກ່ຽວກັບການຊ່ວຍເຫຼືອຂອງສະພາແຫ່ງຊາດຕໍ່ປະຊາຊົນທີ່ປະສົບອຸທົກກະໄພໃນໄລຍະຜ່ານມາ ທັງສະແດງຄວາມຊົມເຊີຍຕໍ່ການຊ່ວຍເຫຼືອຄັ້ງນີ້ ແລະ ໃຫ້ຄຳໝັ້ນສັນຍາວ່າ ຈະນຳເອົາການຊ່ວຍເຫຼືອໄປຮອດພໍ່ແມ່ປະຊາຊົນຜູ້ປະສົບໄພຢ່າງທົ່ວເຖິງ.

ທ່ານ ໂພໄຊ ໄຊຍະສອນ ລາຍງານໃຫ້ຮູ້ວ່າ: ຕະຫຼອດໄລຍະຜ່ານມາ, ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ເອົາໃຈໃສ່ຊ່ວຍເຫຼືອສັງຄົມ ກໍຄືຜູ້ປະສົບອຸທົກກະໄພ ພ້ອມກັນນັ້ນ, ກໍຍັງໄດ້ຫ້າງຫາກະກຽມແຜນງານ, ແຜນການຕ່າງໆເພື່ອປະກອບສ່ວນຊ່ວຍເຫຼືອຟື້ນຟູພື້ນຖານໂຄງລ່າງຂອງບັນດາແຂວງທີ່ປະສົບອຸທົກກະໄພ ເປັນຕົ້ນແມ່ນລະບົບນ້ຳປະປາ, ໄຟຟ້າ, ອາຄານຮຽນ, ຖະໜົນຫົນທາງ.

**(ນາງ ອາລິນ ສຸພົມມະປະດິດ)**



## ຄົ້ນຄວ້າ...

(ຕໍ່ຈາກໜ້າ 6)

ຄົນ ຈາກຜົນການປະເມີນການປະຕິບັດລັດຖະທຳມະນູນ ສະບັບ ປີ 2015 ປັບປຸງເຂົ້າເນື້ອໃນໝວດ ແລະ ມາດຕາ ຂອງລັດຖະທຳມະນູນສະບັບປັບປຸງໃໝ່ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ສາມາດນຳໄປສູ່ການພິຈາລະນາຮັບຮອງທັງເປັນການຄົ້ນຄວ້າ, ວິໄຈເນື້ອໃນ ແລະສະເໜີເພີ່ມເນື້ອໃນທີ່ສັງລວມໄດ້ຈາກການປະເມີນ ເຂົ້າໃສ່ມາດຕາ ຫຼື ວັກໃດໜຶ່ງຂອງມາດຕາທີ່ເຫັນວ່າມີຄວາມຈຳເປັນຕ້ອງປັບປຸງ ເພື່ອໃຫ້ສອດຄ່ອງ ແລະ ຕອບສະໜອງກັບສະພາບການພັດທະນາໃນໄລຍະໃໝ່ ໃຫ້ເປັນຮ່າງສະບັບປັບປຸງເບື້ອງຕົ້ນ ແລ້ວສະຫຼຸບສັງລວມຜົນຂອງການຄົ້ນຄວ້າເນື້ອໃນຂອງແຕ່ລະໝວດ ແລະ ມາດຕາ ຢ່າງລະອຽດ ເພື່ອລາຍງານຂໍທິດຊີ້ນຳ.

ບັນດາທ່ານຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄດ້ສຸມໃສ່ຄົ້ນຄວ້າ, ອະທິບາຍ, ປະກອບຄວາມເຫັນຢ່າງກົງໄປກົງມາ, ມີເນື້ອໃນເລິກເຊິ່ງ ແລະ ຫຼາຍເທື່ອຄົນລ້ວນແຕ່ເປັນບັນຫາທີ່ມີຄວາມສຳຄັນແລະເປັນບ່ອນອີງໃຫ້ແກ່ການປັບປຸງເນື້ອໃນລັດຖະທຳມະນູນ ໃຫ້ແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີຄວາມເຂັ້ມງວດ, ສັກສິດ ແນໃສ່ປົກປ້ອງສິດ ແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າຢ່າງແທ້ຈິງ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ມີຄຳເຫັນກ່າວປິດວ່າ: ຜ່ານການຄົ້ນຄວ້າ, ປະກອບຄວາມເຫັນຢ່າງລະອຽດ, ຖີ່ຖ້ວນ, ຖົກຖຽງກັນຢ່າງມີເຫດມີຜົນ ຈຶ່ງເຮັດໃຫ້ກອງປະຊຸມປະສົບຜົນສຳເລັດຕາມຄາດໝາຍທີ່ວາງໄວ້. ໂດຍພື້ນຖານ, ກອງປະຊຸມເຫັນດີເປັນເອກະພາບຕໍ່ບັນດາເນື້ອໃນທີ່ໄດ້ປັບປຸງຄັ້ງນີ້; ແຕ່ເຫັນວ່າຍັງມີບາງມາດຕາ, ບາງເນື້ອໃນ ແລະ ບາງຄຳສັບ ທີ່ຈະຕ້ອງໄດ້ສືບຕໍ່ນຳໄປຄົ້ນຄວ້າ ແລະ ຂໍທິດຊີ້ນຳຈາກຂັ້ນເທິງ ເພື່ອສືບຕໍ່ຄົ້ນຄວ້າ, ປັບປຸງ ໃຫ້ສອດຄ່ອງ, ຮັດກຸມ ພ້ອມທັງຮ່າງລາຍງານຜົນການຄົ້ນຄວ້າ, ປັບປຸງ (ຮ່າງລັດຖະທຳມູນ)ຄັ້ງນີ້ຕໍ່ຄະນະປະຈຳການຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ເພື່ອພິຈາລະນາ ກ່ອນຈະລາຍງານຕກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກ ແລ້ວຈຶ່ງປັບປຸງເພື່ອຂໍການປະກອບຄວາມເຫັນຕໍ່ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກເທື່ອທີ 9 ສະໄໝທີ XI ໃນທ້າຍເດືອນຕຸລານີ້.

**(ນາງ ອາລິນ ສຸພົມມະປະດິດ)**




# ນາງ ສຳແດງ

# ດົ້ນກົບເມກ

ອາທິດຜ່ານມາ ໄດ້ຂຽນເລື່ອງທ້າວຄຳຄື ທີ່ມີຕົວຕົນໂດດເດັ່ນໃນສັງຄົມ ດ້ານການຕີສີປາກ ສ້າງພາບກິນຜົນງານ ຫຼື ກິນຫົວຄົນອື່ນ ປາກົດມີທາງສຽງຜູ້ອ່ານໃນສັງຄົມສະແດງຄວາມເຫັນວ່າ ຜູ້ທີ່ຄູ່ຄຽງກັນມາກັບທ້າວຄຳຄື ກໍແມ່ນນາງສຳແດງ ທີ່ສ້າງບົດບາດ ແລະ ພາບພົດບໍ່ນ້ອຍໜ້າໄປກວ່າທ້າວ ຄຳຄື ເຊິ່ງນາງສຳແດງນີ້ ອາດມີທັງຢູ່ໃນກົງຈັກການຈັດຕັ້ງທັງລັດ ແລະ ເອກະຊົນ ເພາະລັກສະນະນາງສຳແດງນີ້ ເວລານາງເວົ້າຈາປາໄສ ກໍມີນ້ຳສຽງມ່ວນຊວນຟັງ...,

ຜູ້ຂຽນເອງເຄີຍພົບພໍ້ ຄົນປະເພດແບບນາງສຳແດງນີ້ ເຊິ່ງສັງເກດໄດ້ວ່າ: ຜູ້ກ່ຽວຈະມີຄົນຮູ້ຈັກຫຼາຍຄົນທົ່ວສັງຄົມ ເພາະເວລາເອີ່ຍເຖິງຜູ້ໃຫຍ່ຫຼາຍຄົນ ນາງກໍຈະຮູ້ຈັກໄປໝົດ ເວົ້າກໍຄ່ອງຄື ແລະ ບໍ່ພຽງເທົ່ານັ້ນ ນາງສຳແດງຍັງມີສາຍເລືອດກວ້າງຍາວທາງຍາດພີ່ນ້ອງ ເມື່ອເອີ່ຍເຖິງຄົນມີບົດບາດໃນສັງຄົມ ບາງຄົນກໍບອກວ່າເປັນພີ່ນ້ອງຂອງເພິ່ນ ເຂົ້າທຳນອງຖ້າທຽບໃສ່ເຄືອໄມ້ ກໍຄືງນັບໄດ້ເປັນພັນເຄືອ ຫຼື ຈະສາມາດເວົ້າໄດ້ວ່າ: ນາງ ພັນເຄືອ, ນາງສຳແດງມີລັກສະນະທ່າທາງແຕ່ງໂຕດີມີຖານະ, ໃສ່ເຄື່ອງປະດັບແຕ່ງໂຕຄົບຊຸດ ຈົນສັງຄົມເວົ້າວ່າ ຕູ້ຄຳເຄື່ອນທີ່ພຸ້ນລະ !.

ນາງ ສຳແດງ (ເວົ້າສະເພາະ) ບາງຄົນເຮັດທຸລະກິດ ກໍຈະແລ່ນເຂົ້າຫາຜູ້ມີບົດບາດຕຳແໜ່ງທາງການຈັດຕັ້ງ ແລະ ສັງຄົມ; ນາງເກັ່ງອ້າງເຫດຜົນ, ເວົ້າຈາປາໄສຄ່ອງຫູ, ເວົ້າຄ່ອງ ແລະ ເວົ້າຄື ເຊິ່ງຜູ້ມັກຟັງນາງສຳແດງໂຊລິລາເວົ້າ ກໍແມ່ນຜູ້ອາວຸໂສບາງຄົນທີ່ຜໍຈະມີປະໂຫຍດນຳກັນໄດ້. ເບິ່ງແບບໜຶ່ງ ອາດເຂົ້າທຳນອງປີງພົບກັບທາກ; ນາງສຳແດງບາງຄັ້ງກໍຫຼົງບົດບາດໂຕເອງ ເຖິງຈະເປັນພະນັກງານ ແຕ່ຫຼິ້ນບົດບາດດ້ານທຸລະກິດຫຼາຍກວ່າຕັ້ງໃຈເຮັດວຽກຕາມໜ້າທີ່ ເພາະໜ້າວຽກບໍ່ໄປບໍ່ມາກໍບໍ່ສົນໃຈ ແນວວ່າມີຜູ້ໜູນຫຼັງແອບແຝງ. ຂໍຝາກຄະຕິເຕືອນໃຈວ່າ ການເຮັດວຽກໄຕ່ເຕົ້ານັ້ນ ບໍ່ງ່າຍເທົ່າກັບເອົາຢ່າງອື່ນໄຕ່ເນີ ! ເວົ້າສະເພາະບຸກຄົນເນີ !.

ຜູ້ຂຽນພຽງແຕ່ນຳສະເໜີປາກົດການທາງສຽງຜູ້ອ່ານເພື່ອແລກປ່ຽນນຳກັນວ່າການແຕ່ງຕັ້ງຄົນໃສ່ໜ້າວຽກ; ການສ້າງຄວາມຈະເລີນໃຫ້ສ່ວນລວມນັ້ນ ເຮັດຕາມຄວາມຖືກຕ້ອງເໝາະສົມ ບໍ່ແມ່ນເຮັດຖືກໃຈ !.






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ການເຮັດແນວນັ້ນແມ່ນວ່າວຽກການທີ່ເຮັດນັ້ນຫາກມີຜົນໃຫ້ແກ່ປະຊາຊົນພຽງໃດກໍຕາມ, ຍ້ອນວ່າປະຊາຊົນບໍ່ໄດ້ອອກຄຳຄິດຄຳເຫັນນາ, ປະຊາຊົນບໍ່ໄດ້ຕັ້ງໃຈອອກແຮງຊ່ວຍເຫຼືອ, ວຽກການອັນນັ້ນກໍບໍ່ເຮັດເຖິງກົກເຖິງປາຍໄດ້, ນອກຈາກນັ້ນ ປະຊາຊົນຖືກບັງຄັບໃຫ້ໄປເຮັດ ໂດຍສິດອຳນາດຂອງເຂົາເຈົ້າຖືກປະຕິເສດ ແລະ ກົດຂວາງແນວນັ້ນ, ເຂົາເຈົ້າກໍບໍ່ມ່ວນຊື່ນເຮັດນາ ແລະ ອີກປະການໜຶ່ງ ເມື່ອປະຊາຊົນບໍ່ເຂົ້າໃຈຄວາມສຳຄັນ ແລະ ຜົນປະໂຫຍດຂອງວຽກການທີ່ຖືກບັງຄັບໃຫ້ໄປເຮັດນັ້ນ, ເຂົາເຈົ້າກໍບໍ່ອົດທົນເຮັດນາເຫິງນານ: ດັ່ງນັ້ນ ແມ່ນວ່າຕໍ່ໜ້າຈະໄດ້ຮັບຜົນດີພຽງໃດກໍຕາມ ເຫິງນານໄປກໍຈະປະລາໄຊຢ່າງບໍ່ຕ້ອງສົງໄສ. ເພາະສະນັ້ນ, ວຽກການຫຍັງກໍຕ້ອງຖາມຄວາມເຫັນຂອງປະຊາຊົນ, ຮ່ວມປຶກສາຫາລືກັບປະຊາຊົນ ແລະ ຊີ້ແຈງອະທິບາຍໃຫ້ປະຊາຊົນເຂົ້າໃຈແຈ້ງ.

ບາງຄົນມັກເວົ້າວ່າປະຊາຊົນໂງ່ຈ້າບໍ່ຮູ້ຫຍັງ ແລະ ວ່າໂຕເອງເປັນຜູ້ສະຫຼາດ ຫຼັກແຫຼມ ເກັ່ງກ້າສາມາດ ແລ້ວກໍບໍ່ທຸລະຮ່ຳຮຽນຖ້ອຍຖາມປະຊາຊົນ ແລະ ບໍ່ທຸລະປຶກສາຫາລືກັບປະຊາຊົນ. ນັ້ນແມ່ນຄວາມຜິດພາດທີ່ເປັນອັນຕະລາຍທີ່ສຸດ. ຜູ້ໃດຫາກມີຄວາມຜິດພາດອັນນັ້ນ ຕ້ອງຮີບຮ້ອນແກ້ໄຂປ່ຽນແປງ ບໍ່ດັ່ງນັ້ນ ຈະພົບແຕ່ຄວາມປະລາໄຊຢູ່ເລື້ອຍໆ.

ພວກເຮົາຕ້ອງຮູ້ວ່າກຳລັງຂອງປະຊາຊົນນັ້ນແມ່ນມີຫຼາຍທີ່ສຸດ.

ອ່ານຕໍ່ສະບັບໜ້າ...




# ຢັ່ງ– ເຢາະ–ທາບທາມ

'ຢັ່ງ' ເປັນຄຳກິລິຍາ ໝາຍເຖິງ “ແທກເບິ່ງຄວາມເລິກ” ເຊັ່ນ
- ເອົາໄມ້ໄຜ່ມາຢັ່ງເບິ່ງນ້ຳຢູ່ໃນສ້າງ.
- ເພິ່ນຢັ່ງເບິ່ງຄວາມເລິກຂອງໜອງວ່າເລິກສ່ຳໃດ.

ພ້ອມກັນນັ້ນ, 'ຢັ່ງ' ຍັງໝາຍເຖິງ “ລົງໄປເລິກ” ເຊັ່ນ
- ອ້າຍນີ້, ປຽບດັ່ງຈອກຢູ່ນ້ຳ ຮາກຢັ່ງ ບໍ່ເຖິງດິນ.

ພ້ອມກັນນັ້ນ 'ຢັ່ງ' ຍັງໝາຍເຖິງ “ຄາດຄະເນເບິ່ງ” ເຊັ່ນ
- ກ່ອນຈະເຮັດອັນໃດອັນໜຶ່ງ ເພິ່ນໄດ້ຢັ່ງຄວາມຄິດເຫັນຂອງມະຫາຊົນສາກ່ອນ.

'ເຢາະ' ເປັນຄຳກິລິຍາ ໝາຍເຖິງ “ແທງຄ່ອຍໆ, ແຕະຄ່ອຍໆ” ເຊັ່ນ
- ລາວເອົານິ້ວມືເຢາະຂ້າງໝູ່ ຈົນໝູ່ຕື່ນ.

'ເຢາະ' ຍັງໝາຍເຖິງ “ຕື່ມອີກໜ້ອຍໜຶ່ງ” ເຊັ່ນ
- ເຢາະນ້ຳປາໃສ່ຕື່ມ ເພື່ອໃຫ້ແຊບ.

ພ້ອມກັນນັ້ນ 'ເຢາະ' ຍັງໃຊ້ໃນຄວາມໝາຍອ້ອມທີ່ໝາຍເຖິງ “ຖາມພໍໃຫ້ຮູ້ເລື່ອງ” ເຊັ່ນ
- ຂ້ອຍລອງໄປເຢາະເບິ່ງເລື່ອງນັ້ນແລ້ວ ລາວວ່າພໍຊິແບ່ງໃຫ້ໄດ້ຢູ່.
- ຄຳດີໄປຖາມເຢາະໆເບິ່ງແລ້ວ ເລື່ອງລົດຈັກເກົ່າຂອງລາວນັ້ນ ລາວວ່າແນວໃດກໍບໍ່ຍອມຂາຍ ຊິແປງໄວ້ຂີ່.

'ທາບທາມ' ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ 'ທາບ' ໝາຍເຖິງ “ທັບລົງ, ປະທັບລົງ, ຕິດຕໍ່” ແລະ 'ທາມ' ໝາຍເຖິງ “ທາບ, ດາມ, ລອງເບິ່ງ”. ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ທາບທາມ' ກໍໝາຍເຖິງ “ຢັ່ງໃຈເບິ່ງ, ລອງຢັ່ງສຽງເບິ່ງ” ເຊັ່ນ
- ກອງປະຊຸມທາບທາມຄຳເຫັນໃສ່ຮ່າງປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ.
- ກອງປະຊຸມເປີດກວ້າງທາບທາມຄຳຄິດຄຳເຫັນໃສ່ຮ່າງແຜນພັດທະນາ
- ກົມໃຫຍ່ການເມືອງກອງທັບ ທາບທາມເອົາບຸຄະລາກອນເຂົ້າໃນຄະນະພັກຊຸດໃໝ່.

'ທາບທາມ' ຍັງໝາຍເຖິງ “ສອບຖາມເພື່ອຟັງຄວາມຄິດເຫັນກ່ອນຈະຕົກລົງກັນ” ເຊັ່ນ
- ພໍ່ແມ່ຂອງຄຳແດງໄປທາບທາມສູ່ຂໍຜູ້ສາວໃຫ້ລາວ.
- ເພິ່ນທາບທາມໃຫ້ຄຳສິງເຂົ້າຮ່ວມໃນວຽກງານຮຽບຮຽງວັດຈະນານຸກົມສະບັບໃໝ່.
- ທາງບໍລິສັດໄດ້ທາບທາມອ້າຍຂ້ອຍໃຫ້ເປັນທີ່ປຶກສາຂອງບໍລິສັດ ແຕ່ລາວປະຕິເສດ.

# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ພິມຖືກ | ພິມຜິດ |
|---|---|
| ກວ່າ | ກ່ວາ |
| ກວ້າງ | ກ້ວາງ |
| ຄວ້າ | ຄ້ວາ |
| ຄົ້ນຄວ້າ | ຄົ້ນຄ້ວາ |
| ອວ່າຍ | ອ່ວາຍ |
| ໃຫຍ່ | ໃຫ່ຍ |
| ໄຫວ້ | ໄຫ້ວ |
| ໂຫວ່ | ໂຫ່ວ |
| ຫວ່າງ | ຫ່ວາງ |



## ສຸຂະພາບທາຍໂລດ

# ເຄັດລັບໜ້າໃສ ດ້ວຍວິທີທຳມະຊາດ

ໂດຍ: ທິວາກະທີ



ວັດຖຸດິບທີ່ສາມາດຫາໄດ້ງ່າຍໆບໍ່ຫຍຸ້ງຍາກຕາມທ້ອງຕະຫຼາດ ແລະ ເປັນທຳມະຊາດສາມາດເຮັດໃຫ້ຜິວໜ້າຂອງທ່ານສົດໃສຂຶ້ນໄດ້ເຊິ່ງມີຫຍັງແດ່ແລະ ມີວິທີເຮັດຄືແນວໃດເຮົາມາອ່ານນຳກັນດັ່ງລຸ່ມນີ້:

**1. ໝາກສະຕໍເບີຣີ:** ທີ່ອຸດົມໄປດ້ວຍວິຕາມິນແລະກົດ ASA ທີ່ຊ່ວຍປັບສະພາບຜິວ ແລະ ຊ່ວຍຫຼຸດການອຸດຕັນຂອງຮູຂຸມຂົນໄດ້ດີ ຈຶ່ງເຮັດໃຫ້ຜິວຂອງເຮົາສະອາດ.

**ວິທີໃຊ້:** ນຳໝາກສະຕໍເບີຣີ 2-3 ໜ່ວຍ ແລະ ນ້ຳໝາກນາວ ມາບົດໃຫ້ເຂົ້າກັນແລ້ວທາ ແລະ ນວດໃຫ້ທົ່ວໜ້າປະໄວ້ 2-3 ນາທີ ແລ້ວລ້າງອອກ.

**2. ໝາກກ້ຽງ:** ຊ່ວຍເຮັດໃຫ້ຜິວເຕັ່ງຕຶງ, ຮູຂຸມຂົນໜ້ອຍລົງ ແລະ ຜິວສົດໃສຍິ່ງຂຶ້ນ.

**ວິທີໃຊ້:** ປະສົມນ້ຳໝາກກ້ຽງສົດ 1 ບ່ວງແກງກັບນ້ຳແຮ່ ຈາກນັ້ນ, ເອົາສຳລີມາຈຸ່ມແລ້ວເຊັດໃຫ້ທົ່ວໃບໜ້າ.

**3. ຜັກສະຫຼັດກອບ:** ຊ່ວຍຫຼຸດອາການອັກເສບຂອງຜິວ ແລະ ຊ່ວຍເຮັດໃຫ້ຜິວນຽນນຸ້ມກະຈ່າງໃສ.

**ວິທີໃຊ້:** ນຳຜັກສະຫຼັດກອບ 4 ໃບມາຕົ້ມປະມານ 10 ນາທີ ແລ້ວປະໄວ້ໃຫ້ເຢັນ ແລ້ວຕອງເອົາແຕ່ນ້ຳ ແລະ ເອົາສຳລີມາຈຸ່ມນ້ຳທີ່ຕອງໄວ້ເຊັດໃຫ້ທົ່ວໃບໜ້າ.

**4. ນ້ຳເຜີ້ງ:** ມີຄຸນສົມບັດຊ່ວຍຫຼຸດຮອຍຄ້ຳຮອບດວງຕາ, ຂ້າເຊື້ອແບັກທີເຣຍ ແລະ ບຳລຸງຜິວໃຫ້ນຸ້ມນວນຫຼາຍຂຶ້ນ.

**ວິທີໃຊ້:** ປະສົມນ້ຳເຜີ້ງ 1 ບ່ວງກາເຟ ກັບນ້ຳແຮ່ອຸ່ນໆເຄິ່ງຈອກ ຈາກນັ້ນ, ໃຊ້ສຳລີຈຸ່ມແລ້ວນຳມາວາງເທິງຜິວບໍລິເວນຮອບຕາທັງ 2 ຂ້າງ ກໍຈະຊ່ວຍໃຫ້ຜິວຄ້ຳບໍລິເວນຮອບດວງຕາຫຼຸດລົງ.

**ຂໍ້ມູນຈາກ: www.lnr.org.la**

## ອາດ ກະວີລາວ

# ຄູພູດອຍ

**# ລູກທາດສາມປາງ**

*ພູຜາເຫວຮ່ອມຫ້ວຍ
ເປັນຊອຍວອຍສູງຊັນ
ພຶກສາຊອນແຊມຂຶ້ນ
ມ່ານໝອກມົວຍິ່ງຍ້ອມ

ຂຶ້ນໄຂວ່ເນີນດອຍ
ກ່າຍກັນກວມພື້ນ
ເຕັມຜືນຍາຍທົ່ວ
ໄຫຼອ້ອມໜ່ວຍພູ

* ໂງເງເຂົາໃຫຍ່ນ້ອຍ
ຫ້ວຍນ້ຳໃສລິນລົງ
ບ້ານບ່ອນເຮືອນແຖວຈ້າຍ
ເຫັນຄາເມໝູ່ບ້ານ

ຫຼາຍຍ່ານຍາວໄກ
ຮ່ອມພະນັງຫີນກ້ອນ
ສາຍພູຍາຍຢູ່
ລຽນຖ້ານຕໍ່ຖານ

* ນັບວ່ານານຖ່ອງຖ້ວນ
ຮຽນຈາກລາເຮືອນຊານ
ໜ້າທີ່ທົນທານສູ້
ຈິງໃຈມາກໍ່ສ້າງ

ເດີນດ່ວນວຽນມາ
ດຸ່ງດັ້ນແດນຜີ້
ວິຊາຄູວຽກໃຫຍ່
ທາງກ້ຳແກ່ວດອຍ

* ເດັກນ້ອຍຫຼານອ່ອນຫຼ້າ
ພູມລຳເນົາເນີນພູ
ຍັງງົມງອມຫງອຍງ້ຳ
ບ້ານປ່າເຫີນຫ່າງເບື້ອງ

ເຂດປ່າຊາວເຂົາ
ຂາດຄູເຫຼົາສ້ອມ
ເງົາດຳໄຮ້ສະຫວ່າງ
ເມືອງກວ້າງຮຸ່ງສະໄໝ

* ເຖິງແມ່ນໄກຍິ່ງເຍັ້ນ
ຈັນຍາທຳຂອງຄູ
ປຽບເກືອເຕັມຂັ້ງຂ້ອນ
ເພີ່ມຄວາມເຕັມລົ້ນເລື້ອຍ

ແດນຖິ່ນຈະເລີນຕາ
ທ່ຽງຕຶງແຂງເຂັ້ມ
ນິລັນດອນບໍ່ຈາງເປື່ອຍ
ສະຖິດໝັ້ນບໍ່ອ່ອນໄຫວ ແນ່ແລ້ວ!

* ຊາດມອບໝາຍຕໍ່ຕັ້ງ
ປະຊາກອນເດັກດອຍ
ເຂດກັນດານວິຊາດ້ອຍ
ລໍຄູສອນຊ່ວຍຍູ້

ຄູສັ່ງລົງສອນ
ຊ່ອຍແຍງຍໍປັ້ນ
ເດັກຄອຍຖ້າຢູ່
ຄວາມຮູ້ສິ່ງວິຊາ

* ຮຽນອາສາດຸ່ງໜ້າ
ສອນຂີດຂຽນ ກ ກາ
ໃຫ້ພວກເຂົາເຫັນແຈ້ງ
ບໍ່ໃຫ້ຄາເຄິ່ງຄ້າງ

ຫຼອມຫຼໍ່ນຳຮຽນ
ທຸກວິຊາພາເວົ້າ
ຫູຕາແສງສະຫວ່າງ
ຂຽນໄດ້ອ່ານເປັນ

* ເສັ້ນທາງເດີນຍາກຫຍຸ້ງ
ແຕ່ວ່າຮຽນສຸກໃຈ
ໃຫ້ລູກຫຼານດອຍໄດ້
ຄວາມຮູ້ໄຂຄ່ອງແຄ້ວ

ລຽບລັ່ນພູຜາ
ໄຝ່ສອນຫຼານນ້ອຍ
ປັ້ນຍາໄວບັ້ນໃໝ່
ແວວກ້າສະຫງ່າໃສ

* ໂຮງຮຽນໄກຫ່າງໂຄ້ງ
ມວນໝູ່ເດັກຊາວດອຍ
ເຂົ້າມາຮຽນຫຼາຍໜ້າ
ສາຍເລືອດຄູຢ່າງຂ້ອຍ ຄອຍສິດສອນບໍ່ທໍ້

ທາງກິ່ງສາຍພູ
ຍ່າງວອຍມາເຕົ້າ
ອາຄານຝາແປ້ນຫ່າງ
ຜົນ້ອຍທ່ອງໄຍ...ດອກນາ !






## ຫົກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄິ່ງພິທີການ)

# ສຽມທ້ຽນ

* ***ຊົມເຊີຍ ວັນຄູແຫ່ງຊາດ*** *ຄົບຮອບ* ***30 ປີ (7 ຕຸລາ 1994-7 ຕຸລາ 2024)*** *ຂໍອວຍພອນສົ່ງໃຫ້ ຄູທີ່ອາບາ ແດນສາທາເມືອງລາວ ເຂດທາບົນແຄ້ວນ ໜ້າທີ່ການງານກ້າວ ເຮືອງສີປະກາຍເດັ່ນ ເປັນເບົ້າຫຼອມເລີດລ້ຳບຳພາສ້າງຊາດ ນັ້ນນາ ປະຊາອາຈີນແທບດອກໄມ້ ຫຼາຍຊໍ່ໂຮມຮວມ ກະວີຈອບຈອບເຖິງ ສົ່ງຍັງຄູເຈົ້າ ຜູ້ທີ່ເບົາດອຍກ້າງ ອຽງອັງເຮືອງຮຸ່ງ ໂຊກລາບໄຫຼຫຼັ່ງເຕົ້າ ໂຮມເຂົ້າແດ່ຄູ* ***ທ່ານເອີຍ !***

* ***12 ຕຸລາ*** *ສາຍາ****ວັນປະກາດເອກະລາດ*** *ເຖິງແມ່ນເຫດການຈິງຈະຜ່ານພົ້ນໄປ ແຕ່ຫອບໄພແຫ່ງຄວາມສະຫງ່າງສະໄຫວ ຍັງຮຸ່ງອິໄລທົ່ວແດນສາທາ 12 ຕຸລາເອກອ້າງ ຜົນງານໃຫຍ່ມີມາ ປອງປະຊາສຸກຂີ ລຶບລົມຍໍຍ້ອງ* ***12 ຕຸລາ****ລືກ້ອງ ສະຫຼອງວັນປະຫວັດສາດ ໂລກໂລກາຮັບຮູ້ວ່າລາວສູ້ຊະນະມານ* ***ຊອບແລ້ວ !***

## ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ຮອດສະຫວັນແລ້ວ

ຊາຍໄວກາງຄົນກຳລັງກັບຮອດເຮືອນ ຫຼັງຈາກທີ່ເຜົາເມຍທີ່ເສຍຊີວິດໄປ ລາວໄດ້ຫຼຽວຂຶ້ນໄປເບິ່ງທ້ອງຟ້າ ເຫັນຟ້າມືດຄຶ້ມຄ້າຍຄືຝົນຊິຕົກ ທັງຟ້າກໍຮື່ມໆຮ້ອງສະນັ່ນຫວັ່ນໄຫວ ທັງເຫຼື້ອມແມບໆທົ່ວທ້ອງຟ້າ ລາວຈຶ່ງຖອນຫາຍໃຈ ພ້ອມທັງພຶມພໍາກັບໂຕເອງວ່າ:

"ເມຍຂ້ອຍ... ຄືຊິຮອດສະຫວັນແລ້ວແຫຼະ ເບິ່ງແມ່ທ້ອງຟ້າວຸ້ນວາຍປານຫຍັງ" !!!!!!!



## ຄະຕິເຕືອນໃຈ

# ດອກຫຍ້າ

ຈົ່ງຢ່າໃຊ້ຊີວິດ ດັ່ງຫີນທີ່ຕົກນ້ຳ
ແຕ່ຈົ່ງໃຊ້ຊີວິດ ໃຫ້ເປັນດັ່ງດວງຕາເວັນ

ລັດຖະສະພາຕ່າງປະເທດ

# ກະສັດກຳປູເຈຍ ເປີດອານຸສາວະລີລັດຖະທຳມະນູນ



(Xinhua) - ວັນອັງຄານທີ 24 ກັນຍາຜ່ານມາ, ກະສັດ ນະໂຣດົມ ສີຫະມຸນີ (Norodom Sihamoni) ແຫ່ງລາຊະອານາຈັກກຳປູເຈຍ ໄດ້ເປັນປະທານພິທີເປີດອານຸສາວະລີລັດຖະທຳມະນູນເພື່ອສະເຫຼີມສະຫຼອງວັນປະກາດໃຊ້ລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ ໂດຍກ່າວຄຳເຫັນໃນພິທີວ່າ: ອະນຸສາວະລີລັດຖະທຳມະນູນ ສະແດງໃຫ້ເຫັນວ່າປະຊາຊົນກຳປູເຈຍລ້ວນແຕ່ມີຄວາມເຕັມໃຈເຄົາລົບ, ປົກປ້ອງ, ຍຶດໝັ້ນ ແລະ ປະຕິບັດຕາມລັດຖະທຳມະນູນທີ່ເປັນກົດໝາຍສູງສຸດຂອງລາຊະອານາຈັກ.

ກະສັດ ນະໂຣດົມ ສີຫະມຸນີກ່າວວ່າ "ໃນເວລາ 30 ກວ່າປີແຫ່ງການປະຕິບັດລັດຖະທຳມະນູນ, ເປັນຄວາມຈິງທີ່ບໍ່ສາມາດໂຕ້ຖຽງໄດ້, ລາຊະອານາຈັກກຳປູເຈຍ ໄດ້ບັນລຸສັນຕິພາບ ແລະ ຄວາມສາມັກຄີແຫ່ງຊາດອັນເປັນຜົນຈາກນະໂຍບາຍທີ່ທຸກຝ່າຍໄດ້ປະໂຫຍດ; ລັດຖະທຳມະນູນປີ 1993 ໄດ້ມີຢູ່ແລະໝັ້ນຄົງເປັນເວລາຫຼາຍກວ່າ 3 ທົດສະວັດ ເຊິ່ງຖືເປັນໄລຍະຍາວນານໃນປະຫວັດສາດຂອງລັດຖະທຳມະນູນໃນປະເທດອາຊີຕາເວັນອອກສ່ຽງໃຕ້ແຫ່ງນີ້."

ອະນຸສາວະລີລັດຖະທຳມະນູນ ຕັ້ງຢູ່ສວນສາທາລະນະທາງທິດຕາເວັນຕົກຂອງອານຸສາວະລີເອກະລາດໃນນະຄອນຫຼວງພະນົມເປັນ.

ທ່ານ ອິມ ຊຸນ ລິມ (Im Chhun Lim) ປະທານສະພາລັດຖະທຳມະນູນກຳປູເຈຍ ກ່າວວ່າ: ອານຸສາວະລີລັດຖະທຳມະນູນ ມີຄວາມສູງ 23.4 ແມັດ ເຮັດຈາກໂຄງສ້າງໂລຫະ, ສ່ວນເທິງແມ່ນເຮັດດ້ວຍທອງສຳລິດ 70 ເປີເຊັນ ແລະ ທອງແດງ 30 ເປີເຊັນ, ສ່ວນລຸ່ມແມ່ນເຮັດຈາກຫີນຊາຍ; ສະຖາປັດຕະຍະກຳຂອງອານຸສາວະລີດັ່ງກ່າວ ໄດ້ຮັບແຮງບັນດານໃຈຈາກສະຖາປັດຕະຍະກຳຍຸກກາງ ເຊິ່ງເປັນການປະສົມປະສານລະຫວ່າງສະຖາປັດຕະຍະກຳໂຣມັນ ແລະ ຂະເໝນ; ອານຸສາວະລີ ມີນ້ຳໜັກ 113 ໂຕນ ໃຊ້ເວລາກໍ່ສ້າງ 14 ເດືອນ ດ້ວຍມູນຄ່າ 2.23 ລ້ານໂດລາສະຫະລັດ.

# ຮອງປະທານສະພາແຫ່ງຊາດສະໂລວາກີ ຖືກປົດຕຳແໜ່ງ



ສື່ມວນຊົນທ້ອງຖິ່ນລາຍງານວ່າ ສະພາແຫ່ງຊາດສະໂລວາກີ ໄດ້ປົດທ່ານ ມີຄານ ຊີເມກາ (Michal Simecka) ອອກຈາກຕຳແໜ່ງຮອງປະທານສະພາແຫ່ງຊາດດ້ວຍການລົງຄະແນນສຽງປິດລັບ ໃນວັນອັງຄານທີ 17 ກັນຍາຜ່ານມາ.

ສຳນັກຂ່າວສານຂອງສາທາລະນະລັດສະໂລວາກີ (TASR) ໄດ້ລາຍງານວ່າ, ສະມາຊິກສະພາແຫ່ງຊາດ 77 ທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ລົງຄະແນນສຽງ, ມີບັດລົງຄະແນນສຽງໜຶ່ງໃບທີ່ຖືເປັນໂມຄະ ແລະ ສະມາຊິກ 76 ທ່ານ ລົງຄະແນນສຽງໃຫ້ປົດທ່ານ ຊີເມກາ ອອກຈາກຕຳແໜ່ງ; ສະມາຊິກສະພາແຫ່ງຊາດ ທີ່ມີທັງໝົດ 150 ທີ່ນັ່ງ, ມີຫຼາຍທ່ານທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມລົງຄະແນນສຽງຄັ້ງນີ້.

ໜຶ່ງອາທິດກ່ອນໜ້ານັ້ນ, ໄດ້ມີກອງປະຊຸມສະໄໝພິເສດຂອງສະພາແຫ່ງຊາດເພື່ອປຶກສາຫາລືກ່ຽວກັບການປົດຕຳແໜ່ງທ່ານ ຊີເມກາ ຜູ້ນຳພັກຝ່າຍຄ້ານ ພັກສະໂລວາກີກ້າວໜ້າ; ການເຄື່ອນໄຫວດັ່ງກ່າວໄດ້ລິເລີ່ມໂດຍສະມາຊິກພັກທິດທາງ-ສັງຄົມປະຊາທິປະໄຕ ແລະ ພັກແຫ່ງຊາດສະໂລວັກ, ສອງໃນສາມພັກທີ່ຈັດຕັ້ງລັດຖະບານປະສົມ.

ອີງຕາມ TASR, ເຫດຜົນຕົ້ນຕໍທີ່ອ້າງເຖິງການລົງຄະແນນສຽງຕໍ່ທ່ານ ຊີເມກາ ແມ່ນການນຳໃຊ້ເງິນອຸດໜູນຂອງລັດໃນທາງທີ່ຜິດໂດຍບຸກຄົນໃກ້ຊິດກັບຜູ້ນຳພັກຝ່າຍຄ້ານ ແລະສົງໄສວ່າມີການແຊກແຊງໃນການຈັດສັນເງິນອຸດໜູນເຫຼົ່ານີ້.

ຢ່າງໃດກໍຕາມ, ທ່ານ ຊີເມກາ ປະຕິເສດຄຳວິຈານດັ່ງກ່າວ ໂດຍອະທິບາຍວ່າຂໍ້ສະເໜີດັ່ງກ່າວເປັນການຕອບໂຕ້ຕໍ່ປະສິດທິພາບໃນການປະຕິບັດໜ້າທີ່ຢ່າງມີປະສິດທິຜົນຂອງຕົນໃນຖານະເປັນຜູ້ນຳພັກຝ່າຍຄ້ານ.

ທ່ານ ຊີເມກາ, ອາຍຸ 40 ປີ, ແມ່ນ 1 ໃນ 4 ຮອງປະທານສະພາແຫ່ງຊາດ; ຕຳແໜ່ງປະທານສະພາແຫ່ງຊາດຍັງວ່າງຢູ່ ຫຼັງຈາກທີ່ອະດີດປະທານ ປີເຕີ ເປລເລກຣີນີ (Peter Pelle-grini) ສາບານຕົນເຂົ້າຮັບຕຳແໜ່ງປະທານາທິບໍດີໃນກາງເດືອນມິຖຸນາຜ່ານມາ.

**ແຫຼ່ງຂ່າວ: ຊິນຮວາ**

# ນູແວນເຊລັງ ຜ່ານກົດໝາຍເພື່ອຄວບຄຸມແກ໊ງອາຊະຍາກອນ




(Xinhua) - ນູແວນເຊລັງ ໄດ້ຜ່ານກົດໝາຍທີ່ເຂັ້ມງວດກວ່າເກົ່າເພື່ອຫ້າມໃຊ້ເຄື່ອງໝາຍສັນຍະລັກຂອງແກ໊ງ (gang) ອາຊະຍາກອນໃນສະຖານທີ່ສາທາລະນະທຸກບ່ອນ ແລະ ອະນຸຍາດໃຫ້ສານອອກຄຳສັ່ງຫ້າມການຄົບຄ້າສະມາຄົມ ແລະ ຕຳຫຼວດສາມາດສະກັດກັ້ນແກ໊ງອາຊະຍາກອນຈາກການລວມກຸ່ມ ແລະ ຕິດຕໍ່ສື່ສານກັນ.

ລັດຖະມົນຕີກະຊວງຍຸຕິທຳ ພອນ ໂກນສະມິດ (Paul Goldsmith) ກ່າວວ່າ: ກົດໝາຍທີ່ຜ່ານລັດຖະສະພາເມື່ອວັນພະຫັດທີ 19 ກັນຍາຜ່ານມາ ຈະມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 21 ພະຈິກນີ້ເປັນຕົ້ນໄປ, ຈະໃຫ້ຕຳຫຼວດ ແລະ ສານ ມີເຄື່ອງມືເພີ່ມຕື່ມເພື່ອປາບປາມແກ໊ງອາຊະຍາກອນທີ່ "ສ້າງຄວາມຫຍຸ້ງຍາກ ແລະ ຂົ່ມຂູ່ຄຸກຄາມທົ່ວນູແວນເຊລັງ." ທ່ານ ໂກນສະມິດ ກ່າວວ່າ ໃນລະຫວ່າງການຕັດສິນລົງໂທດ ຈະເນັ້ນໜັກໃຫ້ຄວາມສຳຄັນກັບການເປັນສະມາຊິກແກ໊ງອາຊະຍາກອນຫຼາຍຂຶ້ນ ເຊິ່ງຈະເຮັດໃຫ້ສານຕັດສິນລົງໂທດໜັກກວ່າເກົ່າ; ທ່ານກ່າວຕື່ມວ່າ ສະມາຊິກຂອງແກ໊ງອາຊະຍາກອນ ໄດ້ເພີ່ມຂຶ້ນ 51 ເປີເຊັນ ໃນ 5 ປີທີ່ຜ່ານມາ, ຄຽງຄູ່ກັບອາຊະຍາກຳທີ່ຮຸນແຮງທີ່ເພີ່ມຂຶ້ນ 33 ເປີເຊັນ.

ທ່ານລັດຖະມົນຕີກ່າວວ່າ "ຜູ້ກະທຳຜິດຊ້ຳຄືນຢ່າງຕໍ່ເນື່ອງ ທີ່ຖືກຕັດສິນລົງໂທດໃນການສະແດງເຄື່ອງໝາຍສັນຍະລັກຂອງພວກເຂົາຢ່າງເປີດເຜີຍ ຈະຕ້ອງໄດ້ຮັບຄຳສັ່ງຂອງສານສະບັບໃໝ່ ເຊິ່ງຖືກຫ້າມບໍ່ໃຫ້ຄອບຄອງເຄື່ອງໝາຍສັນຍະລັກຂອງແກ໊ງບໍ່ວ່າຈະຢູ່ໃນທີ່ສາທາລະນະ ຫຼື ສ່ວນຕົວ ເປັນເວລາ 5 ປີ" ທ່ານກ່າວເພີ່ມວ່າ ການສະແດງເຄື່ອງໝາຍສັນຍະລັກຂອງແກ໊ງ ຈາກພາຍໃນພາຫະນະສ່ວນຕົວ ກໍຈະຖືກຫ້າມດ້ວຍ; ກ່ຽວກັບເຫດການຂອງແກ໊ງທີ່ພາໃຫ້ເກີດຄວາມວຸ້ນວາຍ, ຕຳຫຼວດຈະມີອຳນາດອອກຄຳສັ່ງເພື່ອທຳລາຍການໂຮມຊຸມນຸມໃນທີ່ສາທາລະນະຂອງແກ໊ງ ແລະ ອອກຄຳສັ່ງຫ້າມຜູ້ທີ່ກ່ຽວຂ້ອງຢຸດການຊຸມນຸມກັນເປັນເວລາໜຶ່ງອາທິດຫຼັງຈາກເຫດການ.

ທ່ານ ໂກນສະມິດ ກ່າວວ່າ: ຄຳສັ່ງຫ້າມການຄົບຄ້າສະມາຄົມທີ່ອອກໂດຍສານ ຈະປ້ອງກັນບໍ່ໃຫ້ແກ໊ງອາຊະຍາກອນທີ່ຮ້າຍແຮງທີ່ສຸດ ລວມກຸ່ມ ແລະ ຕິດຕໍ່ສື່ສານກັນເປັນເວລາສາມປີ ເຊິ່ງມີຄວາມສ່ຽງທີ່ພວກເຂົາຈະວາງແຜນ ຫຼື ກໍ່ອາຊະຍາກຳອີກຄັ້ງ.

# ສ.ເຊັກ ຈັດການເລືອກຕັ້ງລະດັບແຂວງ ແລະ ສະພາສູງ



(Xinhua) - ການເລືອກຕັ້ງສະພາລະດັບແຂວງ ແລະ ໜຶ່ງສ່ວນສາມຂອງທີ່ນັ່ງໃນສະພາສູງ ໄດ້ເລີ່ມຂຶ້ນຢູ່ສາທາລະນະລັດເຊັກ ເມື່ອຕອນບ່າຍວັນສຸກທີ 20 ກັນຍາຜ່ານມາ (ຕາມເວລາທ້ອງຖິ່ນ).

ມີຜູ້ສະໝັກຮັບເລືອກຕັ້ງຫຼາຍກວ່າ 8,200 ຄົນ ພວມແຂ່ງຂັນເອົາ 675 ທີ່ນັ່ງໃນສະພາແຂວງ (regional council) ແລະ ຜູ້ສະໝັກທີ່ລົງທະບຽນ 169 ຄົນ ກຳລັງແຂ່ງຂັນກັນເພື່ອຍາດເອົາ 27 ທີ່ນັ່ງ ໃນສະພາສູງທີ່ມີທັງໝົດ 81 ທີ່ນັ່ງ ໂດຍໜຶ່ງໃນສາມຈະໄດ້ຮັບການເລືອກຕັ້ງທຸກໆ 2 ປີ.

ຫາກຜູ້ສະໝັກຮັບເລືອກຕັ້ງສະມາຊິກສະພາສູງໃນເຂດໃດໜຶ່ງ ບໍ່ໄດ້ຮັບຄະແນນສຽງສ່ວນໃຫຍ່ (ຫຼາຍກວ່າ 50%) ໃນຮອບທຳອິດ, ຮອບທີສອງຈະຈັດຂຶ້ນໃນອາທິດຕໍ່ມາ ໂດຍຜູ້ສະໝັກສອງຄົນໄດ້ຮັບຄະແນນສຽງຫຼາຍທີ່ສຸດ ຈະແຂ່ງຂັນກັນເອງ.

ປະຊາຊົນຈະເລືອກຜູ້ແທນລະດັບແຂວງ ທີ່ມີວາລະ 4 ປີ ໃນ 13 ແຂວງຂອງປະເທດຍົກເວັ້ນ ນະຄອນຫຼວງປຣາກ (Prague) ເຊິ່ງຈະຈັດຂຶ້ນໃນວັນທີ່ແຕກຕ່າງກັນ; ສະມາຊິກສະພາສູງທີ່ໄດ້ຮັບການເລືອກຕັ້ງມີວາລະ 6 ປີ.

ການເລືອກຕັ້ງໃຊ້ເວລາ 2 ວັນ ແລະ ສິ້ນສຸດລົງໃນເວລາ 14:00 ໂມງຂອງວັນເສົາທີ 21 ກັນຍາ.

ຕາມຜົນຢ່າງເປັນທາງການເບື້ອງຕົ້ນໃນຕອນແລງຂອງວັນດຽວກັນໃຫ້ຮູ້ວ່າ ANO ພັກຝ່າຍຄ້ານຕົ້ນຕໍ ໄດ້ຮັບໄຊຊະນະໃນການເລືອກຕັ້ງລະດັບແຂວງ ໂດຍຊະນະ 10 ຈາກ 13 ແຂວງຂອງປະເທດ.

ແນວຮ່ວມ Together ເຊິ່ງເປັນລັດຖະບານ ຊະນະຢູ່ແຂວງໂມຣາເວຍ (Moravia) ໃຕ້, ພັກ ODS ຊະນະຢູ່ແຂວງໂບຮີເມຍ (Bohemia) ໃຕ້ແລະ ພັກ Mayors for Liberec Region ຊະນະຢູ່ແຂວງຕົນເອງລີເບີເຣັກ.

ແນວຮ່ວມ Together ປະກອບດ້ວຍສາມພັກການເມືອງ: ODS, TOP 09 ແລະ ພັກປະຊາທິປະໄຕຄຣິສຕຽນ (KDU-CSL).

ໃນຂະນະດຽວກັນ, ANO ຍັງເປັນຜູ້ນຳໃນການເລືອກຕັ້ງສະມາຊິກສະພາສູງຮອບທຳອິດ ໂດຍມີຜູ້ສະໝັກ 5 ຄົນ ໄດ້ຮັບເລືອກຕັ້ງໃນຮອບທຳອິດ ແລະ ມີ 2 ຄົນ ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາສູງ ລວມເຖິງມີຜູ້ສະໝັກຫຼາຍທີ່ສຸດທີ່ຜ່ານເຂົ້າສູ່ຮອບທີສອງ.

ເຫັນໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຫາກຫຼາຍສິ່ງຄວນ ສຶກສາເອົາສິງກະໂປ

ໃນບົດຄວາມປະຈຳວັນນີ້ ມີຫຼາຍເລື່ອງລາວຂ່າວສານທີ່ຄັດຈ້ອນມາຈາກໜັງສືພິມປະຊາຊົນຫຼາຍສະບັບ. ທັງໝົດເປັນຂ່າວທີ່ໃຫ້ຄວາມຮູ້ກ່ຽວກັບບົດຮຽນການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ, ລະບຽບການ, ນະໂຍບາຍກໍຄື ແນວທາງທີ່ມີປະສິດທິພາບ ແລະ ປະສິດທິຜົນຂອງສິງກະໂປ. ເລື່ອງທຳອິດແມ່ນກ່ຽວກັບມາດຕະການແກ້ໄຂການຫຼອກລວງຕົ້ມຕຸ່ນເງິນຜ່ານລະບົບອອນລາຍ ໂດຍກຸ່ມແກ້ງຄອນເຊັນເຕີ (Call center). ຂ່າວອອກມາໃນວັນທີ 1 ກໍລະກົດນີ້ໃຫ້ຮູ້ວ່າ ເຈົ້າໜ້າທີ່ຕຳຫຼວດສິງກະໂປ ໄດ້ປິດບັນຊີທະນາຄານທີ່ຕ້ອງສົງໄສ ຈຳນວນ 40 ບັນຊີ ໃນລະຫວ່າງການປະຕິບັດໜ້າທີ່ ແຕ່ວັນທີ 20-27 ມິຖຸນາ 2024 ໂດຍສາມາດຍຶດເງິນໄດ້ຫຼາຍກວ່າ 1,28 ລ້ານໂດລາສິງກະໂປ; ຂ່າວບອກວ່າ ນີ້ຄືຜົນງານການຮ່ວມມືລະຫວ່າງເຈົ້າໜ້າທີ່ຕຳຫຼວດ ແລະ ທະນາຄານແຫ່ງຊາດ ຈຳນວນຜູ້ມີຄວາມຜິດຕົ້ນຕໍໃນການຫຼອກລວງນັ້ນ ມີ 3 ຄົນ, ສ່ວນອີກ 37 ຄົນ ແມ່ນຜູ້ຕ້ອງສົງໄສທົ່ວໄປ ເຊິ່ງຂ່າວບອກວ່າ ພວກເຂົາໄດ້ໃຫ້ການຮ່ວມມືເປັນຢ່າງດີ ໃນຂະບວນການສືບສວນ-ສອບສວນເພື່ອຊອກຮູ້ວ່າເປັນຫຍັງພວກເຂົາ (ຜູ້ຕ້ອງສົງໄສ 37 ຄົນ) ຈຶ່ງປ່ອຍປະລະເລີຍໃຫ້ພວກມິດສາຊີບ ໃຊ້ເປີດບັນຊີທະນາຄານ (ປະຊາຊົນ ວັນທີ 3/7/2024) ເລື່ອງຕໍ່ໄປເວົ້າເຖິງຄວາມສາມາດຂອງສິງກະໂປ ໃນການກ້າວຂຶ້ນເປັນປະເທດທີ່ມີຄວາມສາມາດໃນອັນດັບທີ 1 ຂອງໂລກດ້ານການແຂ່ງຂັນ (ປະຊາຊົນ ວັນທີ 21/6/2024), ເລື່ອງນີ້ເປັນຜົນສຳຫຼວດຂອງສະຖາບັນສາກົນເພື່ອພັດທະນາການຄຸ້ມຄອງ (IMD) ໃນປະເທດສະວິດ (ສະວິດເຊີແລນ) ທີ່ເຜີຍໃຫ້ຮູ້ໃນວັນທີ 18 ມິຖຸນາ ປີນີ້. ການສຳຫຼວດໄດ້ກວມເອົາ 67 ປະເທດ ແລະ ຂົງເຂດ. ສ່ວນປະເທດທີ່ມີຄວາມສາມາດໃນການແຂ່ງຂັນ ຮອງຈາກສິງກະໂປນັ້ນ ໄດ້ແກ່ປະເທດສະວິດ ແລະ ດານມາກ. ປັດໄຈຍູ້ໜູນໃຫ້ສິງກະໂປຄອງອັນດັບທີ 1 ຂອງໂລກ ດ້ານຄວາມສາມາດໃນການແຂ່ງຂັນນັ້ນ ໄດ້ແກ່ທັດສະນະຄະຕິ ແລະ ຄ່ານິຍົມເປັນເລີດ ບວກກັບໂຄງສ້າງພື້ນຖານດ້ານເຕັກໂນໂລຊີທີ່ໂດດເດັ່ນເຂັ້ມແຂງ ແລະ ຕະຫຼາດແຮງງານທີ່ໝັ້ນຄົງ ແລະ ມີສະຖຽນລະພາບ. ເພື່ອຮັກສາຄວາມເປັນເລີດດ້ານການແຂ່ງຂັນໄວ້ໃຫ້ໝັ້ນຄົງ ທາງສິງກະໂປເລັ່ງບຸກທະລຸປະສິດທິພາບໃນດ້ານລາຄາ, ສຸຂະພາບ ແລະ ສິ່ງແວດລ້ອມ ຕື່ມ.

ສິ່ງຄວນຮູ້ຕໍ່ໄປຈາກສິງກະໂປກໍຄືເລື່ອງການຮັບມືກັບສັງຄົມຜູ້ອາຍຸສູງ (ປະຊາຊົນ ວັນທີ 18/7/2024) ບັນຫາຈຳນວນຜູ້ເຖົ້າເພີ່ມຂຶ້ນ ແຕ່ອັດຕາການເກີດຂອງເດັກນ້ອຍພັດຫຼຸດລົງຊັກໄຊ້ນັ້ນ ໄດ້ກາຍເປັນເລື່ອງກັງວົນໃຈຂອງທາງການສິງກະໂປ ເພາະຈຳເປັນຕ້ອງມີລະບົບສະຫວັດດີການອັນເໝາະສົມສຳລັບພວກຜູ້ເຖົ້າ ກໍຄືມາດຕະການແກ້ໄຂສະພາບຂາດແຄນແຮງງານ ອັດຕາການຫຼຸດລົງຂອງການເກີດຂອງເດັກນ້ອຍຢູ່ສິງກະໂປໃນໄລຍະ 10 ປີຜ່ານມາ (2013-2023) ໃນສິງກະໂປມີດັ່ງນີ້: ໃນປີ 2013 ຫຼຸດລົງ 1,19 ສ່ວນໃນປີ 2023 ນັ້ນ ຢູ່ທີ 0,97.

ມາດຕະການແກ້ບັນຫາທີ່ກ່າວມານັ້ນ, ກໍຄືໄດ້ມີການສຶກສາໄຈ້ແຍກສະພາບການເປັນຢູ່ຂອງພວກຜູ້ເຖົ້າທີ່ຢູ່ຕາມລຳພັງ ແລະ ພວກຜູ້ເຖົ້າທີ່ຢູ່ຮ່ວມກັບຄອບຄົວລູກ-ຫຼານ ເພື່ອເປັນທິດກຳນົດວຽກສະຫວັດດີການ. ພ້ອມດຽວກັນ, ກໍປະຕິບັດນະໂຍບາຍໃຫ້ຜູ້ຊາຍທີ່ເປັນຜົວ ສາມາດພັກການມາຊ່ວຍລ້ຽງດູເບິ່ງແຍງລູກໆ ໂດຍໄດ້ຮັບຄ່າຕອບແທນຈາກລັດ, ເພີ່ມສະຖານທີ່ລ້ຽງເດັກແບບເຕັມມື ແລະ ຈັດສັນເງິນອຸດໜູນດ້ານການສຶກສາຂອງເດັກກ່ອນໄວຮຽນ ນີ້ຄືນະໂຍບາຍ ເພື່ອຊຸກຍູ້ໃຫ້ຄູ່ຜົວເມຍມີຄວາມໂລ່ງໃຈໃນການມີລູກ.

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ

ລັດຖະທຳມະນູນ

ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ:
laocon@nalao.la




## ລູກຊາຍສະຫຼາດ

*#ບ່າວກະບື*

ໂຈນກຸ່ມໜຶ່ງ ບຸກເຂົ້າເຮືອນອາວໜູແຈບ ໃນຕອນແລງວັນອາທິດ. ພໍຕັ້ງສະຕິໄດ້, ອາວໜູແຈບ ຈັບເອົາປືນສັ້ນຂອງລູກຊາຍທັງຮ້ອງຂຶ້ນວ່າ: "ຍົກມືຂຶ້ນ!." ພວກໂຈນພາກັນຍົກມືຂຶ້ນເປັນທອນ. ອາວໜູແຈບໃຊ້ສຽງຂູ່ ໃນຂະນະມືເບື້ອງໜຶ່ງຈັບປືນຢູ່.

ພໍໄດ້ຍິນສຽງພວກໂຈນອ້ອນວອນຂໍຊີວິດ, ລູກຊາຍຂອງອາວໜູແຈບກໍລຸກຂຶ້ນວ່າ: "ອີ່ພໍ່... ເຈົ້າບໍ່ຮູ້ຈັກຍິງປືນນີ້ດອກ. ກ່ອນອື່ນຕ້ອງຮ່າຍນ້ຳໃສ່ໃຫ້ເຕັມ ແລ້ວຈຶ່ງເກາະໄກ."

## Clever Son

***#BAOKBU***

Burglars broke into uncle NooChaeb's house on Sunday night. Beware of that, uncle NooChaeb picked up his son's pistol and shouted, "Hands up !" the burglars put up their hands. Uncle NooChaeb gave them sound thrashing while holding the pistol in one hand.

Hearing their cries for mercy, uncle NooChaeb's son woke up and ran to help his father. "Papa, Papa, you won't know how to use this pistol." he said. "First... fill it with water, then press the trigger"

ຕາມພາສາ ກາຕູນ




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ